# ແຜນຍຸດທະສາດ

## ການນຳສະເໜີຂໍ້ມູນການທ່ອງທ່ຽວ ແຂວງວຽງຈັນ




LAOS

*Simply Beautiful*

# ຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮ່າງແຜນຍຸດທະສາດ

| | |
|---|---|
| ຊີ້ນຳລວມ | ທ່ານ ທະວີເພັດ ອຸລາ, ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ |
| | ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| | ຜູ້ຈັດການໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 |
| | ທ່ານ ເພັດສະໜອນ ໄຊຍະວົງ, ຫົວໜ້າຂະແໜງທ່ອງທ່ຽວ |
| | ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງວຽງຈັນ |
| | ຜູ້ຈັດການໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ແຂວງວຽງຈັນ |
| ຮຽບຮຽງ | ທ່ານ ວິລະ ຈັນທະວົງ, ຊ່ຽວຊານດ້ານການນຳສະເໜີຂໍ້ມູນ ແລະ ການພັດທະນາການທ່ອງທ່ຽວ |
| | ທ່ານ ສະເຕຟານ ທະວີເດດ ສີວິໄລ, ຊ່ຽວຊານດ້ານການພັດທະນາການທ່ອງທ່ຽວ |
| ວັນທີ | 01 ພຶດສະພາ 2020 |

# ຄຳນຳ

ແຂວງວຽງຈັນ ເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ມີສະຖານທີ່ທ່ອງທ່ຽວທີ່ຫລາກຫລາຍ ແລະ ມີເລື່ອງລາວທີ່ໜ້າສົນໃຈ ທັງທາງດ້ານຄວາມອຸດົມສົມບູນຂອງທຳມະຊາດ, ວັດທະນະທຳແບບດັ້ງເດີມ ແລະ ຮ່ອງຮອຍສຳຄັນທາງປະຫວັດສາດ, ນັບຕັ້ງແຕ່ສະໄໝເຈົ້າຟ້າງຸ່ມຮອດສະໄໝລ່າເມືອງຂຶ້ນຝລັ່ງ. ເຖິງຢ່າງໃດກໍ່ຕາມ, ການນຳສະເໜີເລື່ອງລາວດັ່ງກ່າວໃຫ້ແກ່ນັກທ່ອງທ່ຽວໃນຮູບແບບທີ່ດຶງດູດຈິດໃຈແມ່ນຍັງຈຳກັດ, ສະແດງອອກບ່ອນການຂາດປ້າຍປະຫວັດແຫລ່ງທ່ອງທ່ຽວຢູ່ຕາມສະຖານທີ່ທ່ອງທ່ຽວ, ສື່ສິ່ງພິມທີ່ມີເນື້ອໃນທີ່ມີຄຸນນະພາບ ແລະ ແທດເໝາະກັບກຸ່ມຕະຫລາດເປົ້າໝາຍ ແລະ ການນຳສະເໜີຂໍ້ມູນຜ່ານສື່ດິຈິຕອນ ແລະ ອອນລາຍ. ເຮັດໃຫ້ນັກທ່ອງທ່ຽວຍັງມີຄວາມຫຍຸ້ງຍາກໃນການທຳຄວາມເຂົ້າໃຈກັບເລື່ອງລາວ ແລະ ຄວາມໝາຍຄວາມສຳຄັນຂອງບັນດາສະຖານທີ່ທ່ອງທ່ຽວທີ່ເຂົາເຈົ້າໄປຢ້ຽມຢາມ.

ດັ່ງນັ້ນ, ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ໂດຍໄດ້ຮັບທຶນສະໜັບສະໜູນຈາກທະນາຄານພັດທະນາອາຊີ (Asian Development Bank – ADB) ຈຶ່ງໄດ້ສ້າງແຜນຍຸດທະສາດການນຳສະເໜີຂໍ້ມູນການທ່ອງທ່ຽວແຂວງວຽງຈັນສະບັບນີ້ຂຶ້ນ, ເພື່ອເປັນທິດທາງໃຫ້ແກ່ການປັບປຸງການນຳສະເໜີຂໍ້ມູນການທ່ອງທ່ຽວ ແລະ ຍົກລະດັບປະສົບການຂອງນັກທ່ອງທ່ຽວໃຫ້ນັບມື້ນັບດີຂຶ້ນເລື້ອຍໆ.

ຂໍຂອບໃຈຄະນະພະແນກ, ຂະແໜງ ແລະ ວິຊາການຈາກພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງວຽງຈັນ ຕະຫລອດຮອດຫ້ອງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງທຸລະຄົມ, ເມືອງວຽງຄຳ, ເມືອງແກ້ວອຸດົມ ແລະ ເມືອງໂພນໂຮງ ທີ່ເປັນເຈົ້າການໃນການປະສານງານກັບບັນດາຜູ້ມີສ່ວນຮ່ວມ ແລະ ພາກສ່ວນກ່ຽວຂ້ອງສຳລັບການເກັບກຳຂໍ້ມູນ ແລະ ຈັດກອງປະຊຸມປຶກສາຫາລື, ເຮັດໃຫ້ແຜນຍຸດທະສາດການນຳສະເໜີຂໍ້ມູນການທ່ອງທ່ຽວແຂວງວຽງຈັນສະບັບນີ້ ມີຄວາມສອດຄ່ອງກັບສະພາບຕົວຈິງ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາການທ່ອງທ່ຽວ ກໍ່ຄືການພັດທະນາເສດຖະກິດ ແລະ ສັງຄົມຂອງແຂວງວຽງຈັນ.

ທ່ານ ທະວີເພັດ ອຸລາ

ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຜູ້ຈັດການໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2

# ສາລະບານ

ຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮ່າງແຜນຍຸດທະສາດ .......... I
ຄໍານໍາ .......... II
1) ພາກສະເຫນີ (Introduction) .......... 1
1.1) ການນໍາສະເຫນີຂໍ້ມູນການທ່ອງທ່ຽວແມ່ນຫຍັງ? .......... 1
1.2) ປະເພດປ້າຍນໍາສະເຫນີຂໍ້ມູນ .......... 2
1.2.1) ປ້າຍຊີ້ບອກ .......... 2
1.2.2) ປ້າຍປະຫວັດແຫລ່ງທ່ອງທ່ຽວ .......... 2
1.2.3) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ .......... 2
1.3) ກ່ຽວກັບແຂວງວຽງຈັນ .......... 3
1.4) ສະພາບການນໍາສະເຫນີຂໍ້ມູນການທ່ອງທ່ຽວ (Planning Context) .......... 4
1.4.1) ສະພາບປັດຈຸບັນ (Current Situation in terms of heritage interpretation) .......... 4
1.4.2) ໂຄງການໃນອາດີດ, ປັດຈຸບັນ ແລະ ອະນາຄົດທີ່ສົ່ງຜົນກະທົບຕໍ່ການນໍາສະເຫນີຂໍ້ມູນ .......... 5
2) ເປົ້າຫມາຍ ແລະ ຈຸດປະສົງ (Goals and Objectives) .......... 6
2.1) ເປົ້າຫມາຍ (Interpretive Goals) .......... 6
2.2) ຈຸດປະສົງ (Interpretive Objectives) .......... 6
2.3) ຈຸດປະສົງໃນລະດັບສະຖານທີ່ທ່ອງທ່ຽວ (Site Objectives) .......... 7
3) ຂອບເຂດພື້ນທີ່ການສ້າງແຜນ (Geographic Scope) .......... 8
4) ຫລັກການໃນການນໍາສະເຫນີຂໍ້ມູນ (Guiding Principle) .......... 9
5) ກຸ່ມຕະຫລາດເປົ້າຫມາຍ (Target Audiences) .......... 11
6) ສະຖານທີ່ທ່ອງທ່ຽວ ແລະ ເລື່ອງລາວ (Site and Stories) .......... 13
6.1) ເມືອງທຸລະຄົມ .......... 13
6.2) ເມືອງວຽງຄໍາ .......... 15
6.3) ເມືອງແກ້ວອຸດົມ .......... 16
6.4) ເມືອງໂພນໂຮງ .......... 17
7) ໃຈຄວາມໃນການນໍາສະເຫນີ (Theme) .......... 18

8) ແນວທາງການນຳສະເໜີຂໍ້ມູນ (Conceptual Approach) ..... 19

9) ວິທີການນຳສະເໜີຂໍ້ມູນ (Interpretive Design Approach) ..... 21

9.1) ເງື່ອນໄຂໃນການອອກແບບ (Design Criteria) ..... 21

9.2) ສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວ (Brand Identity) ..... 21

9.3) ປ້າຍຊີ້ບອກ (Signage / Wayfinding) ..... 22

9.3.1) ປ້າຍຊີ້ບອກຕາມທາງຫລວງ ..... 23

9.3.2) ປ້າຍຊີ້ບອກແຫລ່ງທ່ອງທ່ຽວໃນຕົວເມືອງ ..... 24

9.3.3) ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ ..... 24

9.4) ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board) ..... 25

9.4.1. ປ້າຍແຜນທີ່ ແລະ ຂໍ້ມູນ ..... 25

9.4.2. ປ້າຍກະດານຂໍ້ມູນ ..... 25

9.4.3. ການອອກແບບ ..... 25

9.5) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ ..... 26

9.6) ສື່ສິ່ງພິມ (Printed Materials) ..... 26

9.7) ການນຳທ່ຽວ (Tour Guiding) ..... 27

9.8) ສື່ດີຈີຕອນ (Digital Media) ..... 27

10) ແຜນນຳສະເໜີຂໍ້ມູນ (Content Delivery Plan) ..... 29

10.1) ສະຖານທີ່ທ່ອງທ່ຽວ ..... 29

10.1.1) ເມືອງທຸລະຄົມ ..... 29

10.1.2) ເມືອງວຽງຄຳ ..... 32

10.1.3) ເມືອງແກ້ວອຸດົມ ..... 33

10.1.4) ເມືອງໂພນໂຮງ ..... 34

10.2) ປ້າຍຊີ້ບອກຕາມເສັ້ນທາງ ..... 36

10.2.1) ເມືອງທຸລະຄົມ ..... 37

10.2.2) ເມືອງໂພນໂຮງ ..... 40

10.2.3) ເມືອງວຽງຄຳ ..... 41

10.2.4) ເມືອງແກ້ວອຸດົມ ..... 42

11) ແຜນຈັດຕັ້ງປະຕິບັດ (Action Plan) ..... 44
12) ການຈັດລຽງບູລິມະສິດ (Prioritization) ..... 47
13) ການຕິດຕາມ ແລະ ປະເມີນຜົນ (Monitoring and Evaluation) ..... 48
ເອກະສານອ້າງອີງ ..... 49

# 1) ພາກສະເຫນີ (Introduction)

## 1.1) ການນຳສະເຫນີຂໍ້ມູນການທ່ອງທ່ຽວແມ່ນຫຍັງ?

ການນຳສະເຫນີຂໍ້ມູນການທ່ອງທ່ຽວ (Heritage Interpretation) ແມ່ນສິລະປະໃນການສື່ສານເລື່ອງລາວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ໃນຮູບແບບທີ່ຫນ້າສົນໃຈ ແລະ ສາມາດເຂົ້າໃຈໄດ້ງ່າຍ. ເລື່ອງລາວດັ່ງກ່າວ (Story) ສາມາດນຳສະເຫນີໃນຮູບແບບປ້າຍນຳສະເຫນີຂໍ້ມູນ, ສື່ສິ່ງພິມ, ສື່ດີຈິຕອນ ຫລື ຜ່ານພະນັກງານນຳທ່ຽວ.

ອີງການ Interpretation Canada ໄດ້ກຳນົດຄຳນິຍາມຂອງການນຳສະເຫນີຂໍ້ມູນໄວ້ວ່າ: "ການນຳສະເຫນີຂໍ້ມູນການທ່ອງທ່ຽວ ແມ່ນການສື່ສານເພື່ອອະທິບາຍຄວາມຫມາຍ (reveal meanings) ແລະ ຄວາມສຳພັນ (relationships) ຂອງມໍລະດົກທາງດ້ານທຳມະຊາດ ແລະ ວັດທະນະທຳໃຫ້ແກ່ສັງຄົມໄດ້ຮັບຮູ້, ຜ່ານປະສົບການຕົວຈິງ (first – hand involvement) ກັບວັດຖຸສິ່ງຂອງ, ແບບຈຳລອງ, ທິວທັດ ຫລື ສະຖານທີ່ທ່ອງທ່ຽວ"[1].

ອີງການ HDC International, ໄດ້ໃຫ້ຄຳນິຍາມວ່າ: "ການນຳສະເຫນີຂໍ້ມູນການທ່ອງທ່ຽວ ແມ່ນການສື່ສານເພື່ອແປຂໍ້ມູນດິບ (raw information) ທີ່ເປັນຄຳສັບເຕັກນິກຂອງຜູ້ຊ່ຽວຊານມາເປັນພາສາທີ່ນຳໃຊ້ໃນຊີວິດປະຈຳວັນ, ດ້ວຍວິທີການທີ່ດຶງດູດຈິດໃຈ ແລະ ມີສ່ວນຮ່ວມ ເຊິ່ງສາມາດສ້າງຄວາມປະທັບໃຈໃຫ້ແກ່ຜູ້ມາຢ້ຽມຢາມ"[2].

ການນຳສະເຫນີຂໍ້ມູນການທ່ອງທ່ຽວ ບໍ່ແມ່ນພຽງແຕ່ການຕິດຕັ້ງປ້າຍນຳສະເຫນີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວເທົ່ານັ້ນ, ແຕ່ຍັງລວມເຖິງການກຳນົດເລື່ອງລາວໃນການນຳສະເຫນີ (Interpretive story) ທີ່ໂດດເດັ່ນ, ການກຳນົດໃຈຄວາມໃນການນຳສະເຫນີ (Interpretive theme) ທີ່ຫນ້າສົນໃຈ ແລະ ນຳໃຊ້ວິທີການນຳສະເຫນີ (Interpretive media and services) ທີ່ແທດເຫມາະກັບກຸ່ມຕະຫລາດເປົ້າຫມາຍ (Target audiences).






[1] https://interpretationcanada.ca/page-18058
[2] https://www.heritagedestination.com/hdc-interpretive-communication

## 1.2) ປະເພດປ້າຍນຳສະເຫນີຂໍ້ມູນ

ໂດຍທົ່ວໄປແລ້ວ ປ້າຍນຳສະເຫນີຂໍ້ມູນປະກອບດ້ວຍ 3 ປະເພດດັ່ງນີ້:

### 1.2.1) ປ້າຍຊີ້ບອກ

ປ້າຍຊີ້ບອກ ຫມາຍເຖິງປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງເພື່ອສະແດງໃຫ້ຮູ້ທິດທາງ ແລະ ໄລຍະທາງຂອງຈຸດຫມາຍປາຍທາງການທ່ອງທ່ຽວ[3], ປະກອບມີ 3 ປະເພດຄື: ປ້າຍຊີ້ບອກຕາມທາງຫລວງ, ປ້າຍຊີ້ບອກແຫລ່ງທ່ອງທ່ຽວພາຍໃນຕົວເມືອງ ແລະ ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ. ນອກຈາກຊີ້ບອກເສັ້ນທາງ ແລະ ໄລຍະທາງແລ້ວ, ປ້າຍຊີ້ບອກຍັງຊ່ວຍໃນການຫລຸດຜ່ອນອຸບັດຕິເຫດ ດ້ວຍການຕິດຕັ້ງປ້າຍຊີ້ບອກລ່ວງຫນ້າ (Advance warning sign) ເຮັດໃຫ້ນັກທ່ອງທ່ຽວ ຫລື ຜູ້ຂັບຂີ່ພາຫະນະຫລຸດຜ່ອນຄວາມໄວ ເພື່ອກະກຽມປ່ຽນທິດທາງການສັນຈອນຕາມລູກສອນຂອງປ້າຍ.

### 1.2.2) ປ້າຍປະຫວັດແຫລ່ງທ່ອງທ່ຽວ

ປ້າຍປະຫວັດແຫລ່ງທ່ອງທ່ຽວ ຫມາຍເຖິງປ້າຍທີ່ສະແດງຂໍ້ມູນກ່ຽວກັບປະຫວັດຄວາມເປັນມາ ແລະ ເລື່ອງລາວທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວ. ເນື້ອໃນຂອງປ້າຍແມ່ນປະກອບມີ: ຮູບພາບ, ຕົວຫນັງສື ແລະ ແຜນທີ່ສະເພາະຂອງສະຖານທີ່ທ່ອງທ່ຽວ. ປະຫວັດຄວາມເປັນມາ ແລະ ເລື່ອງລາວ ຈະຕ້ອງມີໃຈຄວາມໃນການນຳສະເຫນີ (Theme) ທີ່ຊັດເຈນ ເພື່ອດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ ແລະ ເຮັດໃຫ້ສາມາດເຂົ້າໃຈເລື່ອງລາວໄດ້ໃນເວລາທີ່ຈຳກັດ.

### 1.2.3) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ

ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ ຫມາຍເຖິງປ້າຍທີ່ອອກແບບມາເພື່ອດຶງດູດຜູ້ຄົນເພື່ອໃຫ້ມີຄວາມສົນໃຈໃນແຫລ່ງທ່ອງທ່ຽວໃດຫນຶ່ງ ຫລື ຫລາຍບ່ອນໃນປ້າຍດຽວ, ໂດຍອາດຈະມີການສະແດງຮູບພາບທິວທັດຂອງສະຖານທີ່ ຫລື ກິດຈະກຳຕ່າງໆໃນສະຖານທີ່ນັ້ນ ພ້ອມກັບຄຳບັນຍາຍຕ່າງໆເພື່ອສ້າງຄວາມສົນໃຈ. ປ້າຍໂຄສະນາປະກອບມີຫລາຍຮູບແບບຄື: ໂປສເຕີ້ (Poster), ແບນເນີ້ (Banner), ບິວບອດ (Billboard) ແລະ ແພໂນ (Panel).

ລາຍລະອຽດໃນການອອກແບບ ແລະ ການຕິດຕັ້ງປ້າຍແຕ່ລະປະເພດແມ່ນໄດ້ອະທິບາຍໄວ້ໃນບົດທີ 9.

ຕົວຢ່າງປ້າຍທັງສາມປະເພດ




ປ້າຍຊີ້ບອກ



ປ້າຍປະຫວັດແຫລ່ງທ່ອງທ່ຽວ




ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ

[3] ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019

### 1.3) ກ່ຽວກັບແຂວງວຽງຈັນ

ແຂວງວຽງຈັນເປັນຈຸດຫມາຍປາຍທາງການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ເນື່ອງຈາກມີແຫລ່ງທ່ອງທ່ຽວທາງທຳມະຊາດທີ່ສວຍງາມ, ມີວັດທະນະທຳທີ່ເປັນເອກະລັກ ແລະ ມີແຫລ່ງທ່ອງທ່ຽວທາງປະຫວັດສາດທີ່ມີເລື່ອງລາວ ແລະ ປະຫວັດຄວາມເປັນມາທີ່ຍາວນານ.

ອ່າງນ້ຳງື່ມເປັນແຫລ່ງທ່ອງທ່ຽວທາງທຳມະຊາດທີ່ໂດດເດັ່ນຂອງເມືອງແກ້ວອຸດົມ, ສາມາດດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເດີນທາງມາລ່ອງເຮືອທ່ຽວຊົມທຳມະຊາດ ພ້ອມທັງຮັບປະທານອາຫານທ້ອງຖິ່ນທີ່ເປັນເອກລັກ ແລະ ສຳພັດກັບກິດຈະກຳທາງນ້ຳເຊັ່ນ: ການພາຍເຮືອກາຍັກ ແລະ ຂັບຂີ່ເຈດສະກີ (Jet ski). ປ່າສະຫງວນແຫ່ງຊາດພູເຂົາຄວາຍ ແລະ ພູພະນັງ ກໍ່ເປັນແຫລ່ງທ່ອງທ່ຽວທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທາງທຳມະຊາດ. ນອກຈາກນັ້ນ, ຍັງມີຖ້ຳ ແລະ ນ້ຳຕົກຕາດທີ່ຕັ້ງຢູ່ຫລາກຫລາຍຕົວເມືອງ. ເປັນທີ່ນິຍົມຫລາຍກວ່າຫມູ່ແມ່ນຢູ່ເມືອງວັງວຽງ ເຊິ່ງການນຳສະເຫນີຂໍ້ມູນແມ່ນໄດ້ກຳນົດໄວ້ສະເພາະໃນແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວເມືອງວັງວຽງ.

ວັດຫລິ່ງຊັນໃຕ້ ເປັນແຫລ່ງທ່ອງທ່ຽວທາງດ້ານວັດທະນະທຳທີ່ສຳຄັນແຫ່ງຫນຶ່ງຂອງເມືອງທຸລະຄົມ, ເປັນບ່ອນປະດິດສະຖານຂອງພະທອງສາມສີ ເຊິ່ງເປັນພະພຸດທະຮູບສັກສິດທີ່ປະຊາຊົນທ້ອງຖິ່ນກາບໄຫວ້ບູຊາ. ຖັດຈາກວັດຫລິ່ງຊັນໃຕ້ໄປບໍ່ໄກ, ແມ່ນທີ່ຕັ້ງຂອງວັດຫລິ່ງຊັນກາງ. ເປັນວັດທີ່ມີສິມເກົ່າແກ່ສ້າງໃນສະໄຫມເຈົ້າໄຊເສດຖາ, ມີພະທອງດຳເຊິ່ງເປັນພະພຸດທະຮູບເກົ່າແກ່ ແລະ ມີວັດຖຸບູຮານຈຳນວນຫລາຍຢູ່ພາຍໃນສິມ. ນອກຈາກນັ້ນ, ຍັງມີວັດວຽງພຣະແກ້ວທີ່ມີເລື່ອງລາວຕິດພັນກັບພຣະແກ້ວມໍລະກົດສະໄຫມເຈົ້າໄຊເສດຖາ ແລະ ວັດປ່າໄຜ່ຫນາມເຈົ້າຟ້າງຸ່ມຢູ່ເມືອງວຽງຄຳ ທີ່ມີເລື່ອງລາວຕິດພັນກັບພະບາງສະໄຫມເຈົ້າຟ້າງຸ່ມ. ນອກຈາກວັດວາອາຮາມແລ້ວ, ແຂວງວຽງຈັນຍັງມີສື່ສຽງທາງດ້ານການຜະລິດຫັດຖະກຳ. ສູນຫັດຖະກຳບ້ານນາບອນຢູ່ເມືອງໂພນໂຮງ ແມ່ນສະຖານທີ່ງນັກທ່ອງທ່ຽວສາມາດຮຽນຮູ້ກ່ຽວກັບວິຖີຊີວິດຂອງປະຊາຊົນທ້ອງຖິ່ນ ເປັນຕົ້ນແມ່ນການຜະລິດເຄື່ອງຫັດຖະກຳຈັກສານຈາກໄມ້ປ່ອງ, ການຜະລິດເຂົ້າປຸ້ນແບບພື້ນບ້ານ, ການເຮັດນາ ແລະ ການຫາຢູ່ຫາກິນຕາມທຳມະຊາດ. ນັກທ່ອງທ່ຽວຍັງສາມາດແວ່ຊົມການຕ່ຳຫູກທໍໄຫມຢູ່ສູນຫັດຖະກຳຈັກສານກຸ່ມບ້ານນາເຫລົ່າ ແລະ ການຜະລິດເກືອຢູ່ເມືອງທຸລະຄົມ.

ແຂວງວຽງຈັນຍັງມີແຫລ່ງທ່ອງທ່ຽວທາງປະຫວັດສາດທີ່ສຳຄັນຫລາຍແຫ່ງ, ເຖິງແມ່ນວ່າບາງແຫ່ງຍັງຕ້ອງມີການພັດທະນາເພື່ອໃຫ້ສາມາດເປັນສະຖານທີ່ທ່ອງທ່ຽວ. ມີອາຄານເກົ່າສະໄຫມຝລັ່ງທີ່ຕັ້ງຢູ່ຖະຫນົນເລກທີ 10 ທີ່ບ້ານເກີນ, ເມືອງໂພນໂຮງ, ເດີ່ນບິນເກົ່າ ແລະ ຫໍສີລາຈາລຶກວິລະບູລຸດນັກຮົບປະສົມລາວ - ຫວຽດ.

## 1.4) ສະພາບການນຳສະເໜີຂໍ້ມູນການທ່ອງທ່ຽວ (Planning Context)

### 1.4.1) ສະພາບປັດຈຸບັນ (Current Situation in terms of heritage interpretation)

ການນຳສະເໜີຂໍ້ມູນຂອງບັນດາສະຖານທີ່ທ່ອງທ່ຽວພາຍໃນແຂວງວຽງຈັນແມ່ນຍັງຈຳກັດ, ຂາດປ້າຍນຳສະເໜີຂໍ້ມູນ, ປ້າຍຊີ້ບອກຕາມເສັ້ນທາງ ແລະ ພາຍໃນສະຖານທີ່ທ່ອງທ່ຽວ, ສື່ສິ່ງພິມ ແລະ ການນຳສະເໜີຂໍ້ມູນໃນສື່ສັງຄົມອອນລາຍ. ປ້າຍປະຫວັດແຫລ່ງທ່ອງທ່ຽວຢູ່ຫນ້າເຂື່ອນນໍ້າງື່ມ 1 ທີ່ຕັ້ງຢູ່ເທິງຈຸດຊົມວິວຍັງມີຂໍ້ມູນທີ່ຈຳກັດ, ລະບຸພຽງແຕ່ໄລຍະການກໍ່ສ້າງ, ປະເທດຮ່ວມທຶນ ແລະ ກຳລັງການຜະລິດ. ຍັງຂາດເລື່ອງລາວທີ່ຫນ້າສົນໃຈສຳລັບນັກທ່ອງທ່ຽວເຊັ່ນ: ຄວາມເປັນມາຂອງການສ້າງເຂື່ອນ, ຜົນກະທົບທາງບວກ ແລະ ຄວາມສຳພັນຂອງເຂື່ອນແຫ່ງນີ້ກັບປະຊາຊົນທ້ອງຖິ່ນ ແລະ ສະພາບແວດລ້ອມ. ຢູ່ເຂດອ່າງນໍ້າງື່ມກໍ່ຂາດການນຳສະເໜີຂໍ້ມູນ, ສູນຂໍ້ມູນຂ່າວສານການທ່ອງທ່ຽວເມືອງແກ້ວອຸດົມກໍ່ນຳສະເໜີພຽງແຕ່ຂໍ້ມູນການທ່ອງທ່ຽວຂອງແຕ່ລະເມືອງພາຍໃນແຂວງວຽງຈັນ ແຕ່ບໍ່ໄດ້ນຳສະເໜີຂໍ້ມູນກ່ຽວກັບອ່າງນໍ້າງື່ມ. ປ້າຍປະຫວັດແຫລ່ງທ່ອງທ່ຽວຢູ່ຫໍສີລາຈາລຶກວິລະບູລຸດນັກຮົບປະສົມລາວ - ຫວຽດທີ່ຕັ້ງຢູ່ບ້ານໂພນແຮ່ເມືອງໂພນໂຮງກໍ່ມີພຽງພາສາລາວ ແລະ ພາສາຫວຽດ, ເຮັດໃຫ້ນັກທ່ອງທ່ຽວສາກົນມີຄວາມຫຍຸ້ງຍາກໃນການທຳຄວາມເຂົ້າໃຈເລື່ອງລາວຫາກຂາດພະນັກງານນຳທ່ຽວ. ນອກຈາກນັ້ນ, ເນື້ອໃນ ແລະ ເລື່ອງລາວທີ່ນຳສະເໜີກໍ່ຍັງບໍ່ທັນກຳນົດໃຈຄວາມໃນການນຳສະເໜີ (Theme) ທີ່ຊັດເຈນ ເພື່ອເຮັດໃຫ້ນັກທ່ອງທ່ຽວສາມາດຈົດຈຳເລື່ອງລາວ ແລະ ເຊື່ອມໂຍງກັບສະຖານທີ່ທ່ອງທ່ຽວໄດ້.

ປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວແມ່ນຍັງຈຳກັດ, ບາງປ້າຍຊີ້ບອກທີ່ມີຢູ່ໃນປັດຈຸບັນກໍ່ມີສະພາບຊຸດໂຊມ ແລະ ບາງປ້າຍກໍ່ມີພຽງພາສາລາວ. ປ້າຍຊີ້ບອກຢູ່ສາມແຍກເສັ້ນທາງເລກທີ 10 ກໍ່ລະບຸພຽງແຕ່ເຂື່ອນໄຟຟ້ານໍ້າງື່ມ 1, ແຕ່ບໍ່ໄດ້ຊີ້ບອກກ່ຽວກັບອ່າງນໍ້າງື່ມ. ປ້າຍຊີ້ບອກທາງເຂົ້າວັດປ່າໄຜ່ຫນາມເຈົ້າຟ້າງຸ່ມຢູ່ເມືອງວຽງຄຳ ກໍ່ມີແຕ່ພາສາລາວ ແລະ ມີສະພາບຊຸດໂຊມ. ສ່ວນປ້າຍຊີ້ບອກທາງເຂົ້າຫໍສີລາຈາລຶກວິລະບູລຸດນັກຮົບປະສົມລາວ - ຫວຽດ ມີແຕ່ພາສາລາວ ແລະ ພາສາຫວຽດ. ຄຽງຄູ່ກັນນັ້ນ, ຂໍ້ມູນຂອງສະຖານທີ່ທ່ອງທ່ຽວທີ່ມີຢູ່ໃນແຜນທີ່ອອນລາຍ (Google Maps) ກໍ່ຍັງມີຈຳກັດ, ເຊິ່ງນິຍົມນຳໃຊ້ຫລາຍໃນກຸ່ມນັກທ່ອງທ່ຽວອິດສະຫລະທີ່ເບິ່ງແຜນທີ່ດັ່ງກ່າວຢູ່ໃນມືຖືຂອງເຂົາເຈົ້າເພື່ອເຂົ້າເຖິງສະຖານທີ່ທ່ອງທ່ຽວ.

ສື່ສິ່ງພິມແມ່ນສາມາດພົບເຫັນໄດ້ຢູ່ຕາມສູນຂໍ້ມູນຂ່າວສານການທ່ອງທ່ຽວ ໃນຮູບແບບແຜ່ນພັບໂຄສະນາ ແລະ ແຜນທີ່ທ່ອງທ່ຽວ, ແຕ່ນັກທ່ອງທ່ຽວກໍ່ນິຍົມນຳໃຊ້ນັບມື້ນັບຫນ້ອຍລົງ ເນື່ອງຈາກການເຂົ້າເຖິງຂໍ້ມູນທາງອອນລາຍດ້ວຍມືຖືແມ່ນມີຄວາມສະດວກ ແລະ ມີຂໍ້ມູນທີ່ສົດໃຫມ່ກວ່າ. ເນື່ອງຈາກເວັບໄຊທ່ອງທ່ຽວລາວກຳລັງໄດ້ຮັບການປັບປຸງ[4] ຈຶ່ງບໍ່ສາມາດປະເມີນການນຳສະເໜີຂໍ້ມູນການທ່ອງທ່ຽວແຂວງວຽງຈັນໃນເວັບໄຊດັ່ງກ່າວໄດ້. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນທາງ

[4] https://www.tourismlaos.org/central-provinces/vientiane-province

ອອນລາຍຢູ່ໃນເວັບໄຊທ່ອງທ່ຽວອື່ນກໍ່ຍັງມີຈຳກັດ, ໂດຍສະເພາະແມ່ນ TripAdvisor[5]. ຂໍ້ມູນສ່ວນໃຫຍ່ແມ່ນກ່ຽວກັບສະຖານທີ່ທ່ອງທ່ຽວຢູ່ເມືອງວັງວຽງ, ແຕ່ຍັງຂາດຂໍ້ມູນຂອງສະຖານທີ່ທ່ອງທ່ຽວຢູ່ເມືອງອື່ນໆພາຍໃນແຂວງວຽງຈັນ.

### 1.4.2) ໂຄງການໃນອາດີດ, ປັດຈຸບັນ ແລະ ອະນາຄົດທີ່ສົ່ງຜົນກະທົບຕໍ່ການນຳສະເຫນີຂໍ້ມູນ

ເຖິງແມ່ນວ່າແຂວງວຽງຈັນເປັນ 1 ໃນ 9 ແຂວງເປົ້າຫມາຍຂອງໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ (Sustainable Tourism Development Project – STDP) ໃນລະຫວ່າງປີ 2009 – 2013 ໂດຍໄດ້ຮັບທຶນສະຫນັບສະຫນູນຈາກທະນາຄານພັດທະນາອາຊີ (Asian Development Bank – ADB), ແຕ່ກິດຈະກຳຂອງໂຄງການສ່ວນໃຫຍ່ກໍ່ສຸມໃສ່ແຕ່ເມືອງວັງວຽງ[6] ເຊິ່ງຈະໄດ້ອະທິບາຍໄວ້ໃນແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວເມືອງວັງວຽງ.

ປັດຈຸບັນ, ແຂວງວຽງຈັນແມ່ນຫນຶ່ງໃນສາມແຂວງເປົ້າຫມາຍຂອງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 (Second GMS Tourism Infrastructure for Inclusive Growth Project – TIIGP) ລະຫວ່າງປີ 2019 – 2025. ຫນຶ່ງໃນກິດຈະກຳຂອງໂຄງການແມ່ນການສະຫນັບສະຫນັບການນຳສະເຫນີຂໍ້ມູນການທ່ອງທ່ຽວ, ນັບຕັ້ງແຕ່ການສ້າງ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວສະບັບນີ້. ນອກຈາກນັ້ນ, ຍັງມີກິດຈະກຳທີ່ຕິດພັນກັບການນຳສະເຫນີຂໍ້ມູນຢູ່ເຂດອ່າງນ້ຳງື່ມເຊັ່ນ: ການປັບປຸງເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວເຂດອ່າງນ້ຳງື່ມ ຈາກຫນ້າເຂື່ອນນ້ຳງື່ມ 1 ຫາທ່າເຮືອ, ປັບປຸງທ່າເຮືອ, ຕະຫລາດ ແລະ ສະຖານທີ່ຈຳຫນ່າຍສິນຄ້າຂອງປະຊາຊົນ, ສ້າງພື້ນທີ່ສີຂຽວສາທາລະນະ ແລະ ປັບປຸງສູນຂໍ້ມູນຂ່າວສານການທ່ອງທ່ຽວ[7].

ການປັບປຸງການນຳສະເຫນີຂໍ້ມູນການທ່ອງທ່ຽວແຂວງວຽງຈັນ ແມ່ນຈະຕ້ອງອີງໃສ່ໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກ ແລະ ຊັບພະຍາກອນຕ່າງໆທີ່ໂຄງການໄລຍະຜ່ານມາໄດ້ສ້າງໄວ້ແລ້ວ ພ້ອມທັງຮ່ວມມືກັບທຸກພາກສ່ວນທີ່ມີເປົ້າຫມາຍອັນດຽວກັນ ເພື່ອເຮັດໃຫ້ກິດຈະກຳມີປະສິດທິພາບ ແລະ ປະສິດທິຜົນ.

[5] https://www.tripadvisor.com/Attractions-g3650266-Activities-Vientiane_Province.html

[6] Project Administration Memorandum, LAO/VIE: Greater Mekong Subregion Sustainable Tourism Development Project, Page 25, Asian Development Bank, 2009

[7] Project Administration Manual, Second Greater Mekong Subregion Tourism Infrastructure for Inclusive Growth Project, Page 2, Asian Development Bank, 2018

## 2) ເປົ້າຫມາຍ ແລະ ຈຸດປະສົງ (Goals and Objectives)

### 2.1) ເປົ້າຫມາຍ (Interpretive Goals)

ຄູ່ມືການສ້າງແຜນແມ່ບົດການນໍາສະເຫນີຂໍ້ມູນ (Interpretive Master Planning[8]) ຂອງ ທ່ານ ຈອນ (John A Veverka) ຂອງສໍານັກພິມ MuseumEtc ປະເທດສະກອດແລັນໄດ້ກໍານົດໄວ້ວ່າ: ເປົ້າຫມາຍຂອງການນໍາສະເຫນີຂໍ້ມູນແມ່ນສິ່ງທີ່ເຮົາຕ້ອງການໃຫ້ມັນເກີດຂຶ້ນ, ບໍ່ຕ້ອງສະເພາະເຈາະຈົງ ແລະ ບໍ່ຈໍາເປັນຕ້ອງວັດແທກໄດ້ຄືກັນກັບຈຸດປະສົງ. ສະນັ້ນ, ເປົ້າຫມາຍຂອງການນໍາສະເຫນີຂໍ້ມູນການທ່ອງທ່ຽວແຂວງວຽງຈັນແມ່ນ:

1) ເພື່ອຍົກລະດັບປະສົບການຂອງນັກທ່ອງທ່ຽວ (To enhance visitor experience)

ຖ້ານັກທ່ອງທ່ຽວມີປະສົບການທີ່ດີໃນການຢ້ຽມຢາມສະຖານທີ່ທ່ອງທ່ຽວ ກໍ່ຈະສົ່ງຜົນເຖິງຄວາມເພິ່ງພໍໃຈຂອງເຂົາເຈົ້າຢູ່ຈຸດຫມາຍປາຍທາງການທ່ອງທ່ຽວ. ເພື່ອເຮັດໃຫ້ນັກທ່ອງທ່ຽວມີປະສົບການທີ່ດີ, ການນໍາສະເຫນີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ ບໍ່ຄວນແຕ່ສະຫນອງຂໍ້ມູນທີ່ຫນ້າສົນໃຈໃຫ້ແກ່ນັກທ່ອງທ່ຽວເທົ່ານັ້ນ (ເພາະເຂົາເຈົ້າຈະລືມ), ແຕ່ຈະຕ້ອງນໍາພາໃຫ້ເຂົາເຈົ້າຫາຂໍ້ສະຫລຸບຂອງເລື່ອງລາວຈາກຂໍ້ມູນດັ່ງກ່າວດ້ວຍຕົນເອງ.

2) ເພື່ອປົກປັກຮັກສາມໍລະດົກທາງດ້ານການທ່ອງທ່ຽວ (To protect the site and its resources)

ການນໍາສະເຫນີຂໍ້ມູນຊ່ວຍໃນການປົກປັກຮັກສາມໍລະດົກທາງດ້ານທໍາມະຊາດ, ປະຫວັດສາດ ແລະ ວັດທະນະທໍາ. ນັກທ່ອງທ່ຽວບາງກຸ່ມທີ່ຂາດຄວາມຮັບຮູ້ໃນການປະພຶດຕົນເອງເວລາຢ້ຽມຢາມວັດວາອາຮາມ, ນໍ້າຕົກຕາດ ຫລື ສະຖານທີ່ສໍາຄັນທາງປະຫວັດສາດ ກໍ່ຈະສົ່ງຜົນກະທົບທາງລົບໃຫ້ແກ່ສະຖານທີ່ທ່ອງທ່ຽວ. ການນໍາສະເຫນີຂໍ້ມູນຈະຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈ ແລະ ເຫັນເຖິງຄວາມສໍາຄັນຂອງສະຖານທີ່ ແລະ ສິ່ງແວດລ້ອມອ້ອມຂ້າງ.

### 2.2) ຈຸດປະສົງ (Interpretive Objectives)

ຈຸດປະສົງແມ່ນສິ່ງທີ່ຕ້ອງເຮັດໃຫ້ສໍາເລັດເພື່ອບັນລຸເປົ້າຫມາຍຂ້າງເທິງ ແລະ ເປັນສິ່ງທີ່ສາມາດວັດແທກໄດ້, ການນໍາສະເຫນີຂໍ້ມູນການທ່ອງທ່ຽວແຂວງວຽງຈັນແມ່ນມີຈຸດປະສົງດັ່ງນີ້:

1) ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດຈົດຈໍາໃຈຄວາມໃນການນໍາສະເຫນີ (Theme) ຂອງເລື່ອງລາວທີ່ນໍາສະເຫນີຢູ່ສະຖານທີ່ທ່ອງທ່ຽວພາຍຫລັງສໍາເລັດການທ່ອງທ່ຽວແຂວງວຽງຈັນ
2) ນັກທ່ອງທ່ຽວສ່ວນໃຫຍ່ທີ່ມາຢ້ຽມຢາມແຂວງວຽງຈັນ ຈະສາມາດເດີນທາງເຂົ້າເຖິງແຫລ່ງທ່ອງທ່ຽວໄດ້ງ່າຍຂຶ້ນໂດຍອາໄສປ້າຍຊີ້ບອກຕາມເສັ້ນທາງ ແລະ ແຜນທີ່ອອນລາຍ.

[8] Interpretive Master Planning, Volume One: Strategies for the New Millennium, Page 70, John A Veverka, 2018

## 2.3) ຈຸດປະສົງໃນລະດັບສະຖານທີ່ທ່ອງທ່ຽວ (Site Objectives)

ເພື່ອຈະບັນລຸຈຸດປະສົງລວມຂ້າງເທິງ, ເຮົາຈຳເປັນຕ້ອງກຳນົດຈຸດປະສົງລົງເລິກໃນລະດັບສະຖານທີ່ທ່ອງທ່ຽວ ເຊິ່ງແບ່ງອອກເປັນ 3 ລະດັບຄື[9]:

ຈຸດປະສົງໃນການຮຽນຮູ້ (Learning objectives): ແມ່ນສິ່ງທີ່ເຮົາຕ້ອງການໃຫ້ນັກທ່ອງທ່ຽວໄດ້ຮຽນຮູ້ ຫລື ຈົດຈຳຜ່ານການນຳສະເຫນີຂໍ້ມູນເຊັ່ນ: ພາຍຫລັງການຢ້ຽມຢາມບ້ານຜະລິດເຫລົ້າຂາວ, ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດອະທິບາຍຂັ້ນຕອນການຕົ້ມເຫລົ້າຂາວແບບພື້ນບ້ານ. ພາຍຫລັງທີ່ຢ້ຽມຢາມວັດແຫ່ງຫນຶ່ງ, ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດອະທິບາຍຄວາມຫມາຍຂອງຮູບແຕ້ມບູຮານຢູ່ປະຕູທາງເຂົ້າວັດ.

ຈຸດປະສົງໃນການປ່ຽນແປງພຶດຕິກຳ (Behavior objective): ແມ່ນສິ່ງທີ່ເຮົາຢາກໃຫ້ນັກທ່ອງທ່ຽວເຮັດຜ່ານການນຳສະເຫນີຂໍ້ມູນເຊັ່ນ: ນັກທ່ອງທ່ຽວສ່ວນໃຫຍ່ຈະຊື້ຜະລິດຕະພັນເຫລົ້າຂາວເປັນເຄື່ອງຝາກຂອງຕ້ອນ. ຖ້າສາມາດບັນລຸຈຸດປະສົງນີ້, ປະຊາຊົນບ້ານທີ່ຜະລິດເຫລົ້າຂາວກໍ່ຈະມີລາຍຮັບຫລາຍຂຶ້ນ ເຊິ່ງດີກວ່າການບັນລຸພຽງແຕ່ຈຸດປະສົງຂອງການຮຽນຮູ້ທີ່ນັກທ່ອງທ່ຽວພຽງແຕ່ເຂົ້າໃຈຂັ້ນຕອນການຕົ້ມເຫລົ້າ, ແຕ່ບໍ່ໄດ້ຊື້ຜະລິດຕະພັນ. ຕົວຢ່າງກ່ຽວກັບຮູບແຕ້ມບູຮານຢູ່ວັດແມ່ນ ນັກທ່ອງທ່ຽວສ່ວນໃຫຍ່ຈະມີພຶດຕິກຳທີ່ເຫມາະສົມເວລາຢ້ຽມຢາມວັດວາອາຮາມ.

ຈຸດປະສົງໃນການປ່ຽນແປງອາລົມ (Emotional objectives): ເຮົາຈະບໍ່ສາມາດປ່ຽນແປງພຶດຕິກຳນັກທ່ອງທ່ຽວໄດ້, ຖ້າຍັງບໍ່ສາມາດປ່ຽນແປງອາລົມ ຫລື ຄວາມຮູ້ສຶກຂອງເຂົາເຈົ້າ. ແມ່ນສິ່ງທີ່ເຮັດໃຫ້ນັກທ່ອງທ່ຽວຈົດຈຳເລື່ອງລາວຂອງສະຖານທີ່ທ່ອງທ່ຽວ ເນື່ອງຈາກມັນກະທົບຈິດໃຈຂອງເຂົາເຈົ້າ (Strong feeling), ເຊິ່ງນຳໄປສູ່ການປ່ຽນແປງທາງດ້ານພຶດຕິກຳຂອງເຂົາເຈົ້າ. ນັກທ່ອງທ່ຽວຮູ້ສຶກປະຫລາດໃຈ, ໃຈຮ້າຍ, ໂສກເສົ້າ, ຮູ້ສຶກຜິດ ແລະ ພາກພູມໃຈ ຜ່ານເລື່ອງລາວທີ່ນຳສະເຫນີກ່ຽວກັບສະຖານທີ່ທ່ອງທ່ຽວ. ນັກທ່ອງທ່ຽວສ່ວນໃຫຍ່ຈະຮູ້ສຶກປະຫລາດໃຈກ່ຽວກັບຂັ້ນຕອນການຕົ້ມເຫລົ້າຂາວແບບພື້ນບ້ານ, ເນື່ອງຈາກເຂົາເຈົ້າຄຸ້ນເຄີຍກັບຂັ້ນຕອນການຜະລິດແບບໂຮງຈັກໂຮງງານ. ໃນບາງຈຸດຫມາຍປາຍທາງການທ່ອງທ່ຽວກໍ່ເປີດໃຫ້ນັກທ່ອງທ່ຽວຢ້ຽມຢາມອະນຸສອນສະຖານຂອງສະຫນາມຮົບ, ນັກທ່ອງທ່ຽວຈະຮູ້ສຶກໂສກເສົ້າຕໍ່ກັບເລື່ອງລາວຂອງການສູນເສຍ ແລະ ເຂົ້າໃຈຜົນຮ້າຍຂອງສົງຄາມ.

ແນວທາງການກຳນົດຈຸດປະສົງໃນການນຳສະເຫນີຂໍ້ມູນໃນລະດັບສະຖານທີ່ທ່ອງທ່ຽວຂ້າງເທິງ ຈະຖືກນຳໃຊ້ໄລຍະອອກແບບເນື້ອໃນ ແລະ ເລື່ອງລາວ, ເຊິ່ງຈະຍັງບໍ່ທັນໄດ້ກຳນົດໄວ້ໃນແຜນຍຸດທະສາດການນຳສະເຫນີຂໍ້ມູນສະບັບນີ້.

[9] Interpretive Master Planning, Volume One: Strategies for the New Millennium, Page 70, John A Veverka, 2018

## 3) ຂອບເຂດພື້ນທີ່ການສ້າງແຜນ (Geographic Scope)

ການສ້າງແຜນການນຳສະເໜີຂໍ້ມູນການທ່ອງທ່ຽວແຂວງວຽງຈັນ ແມ່ນສຸມໃສ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ. ແຕ່ລະເມືອງແມ່ນມີທ່າແຮງດ້ານການທ່ອງທ່ຽວ, ມີນັກທ່ອງທ່ຽວໄປຢ້ຽມຢາມ ແລະ ມີທຸລະກິດໃນຂະແໜງການທ່ອງທ່ຽວດຳເນີນຢູ່. ແຕ່ລະສະຖານທີ່ທ່ອງທ່ຽວແມ່ນມີຄວາມໂດດເດັ່ນ ແລະ ມີເອກະລັກເຊັ່ນ: ແຫລ່ງທ່ອງທ່ຽວທາງທຳມະຊາດເຂດອ່າງນ້ຳງື່ມເມືອງແກ້ວອຸດົມ, ແຫລ່ງທ່ອງທ່ຽວທາງປະຫວັດສາດທີ່ສຳຄັນຂອງເມືອງວຽງຄຳ ແລະ ວັດທະນະທຳແບບດັ້ງເດີມຂອງເມືອງໂພນໂຮງ ແລະ ເມືອງທຸລະຄົມ.

ແຜນທີ່: ແຂວງວຽງຈັນ



## 4) ຫລັກການໃນການນຳສະເຫນີຂໍ້ມູນ (Guiding Principle)

ຫລັກການໃນການນຳສະເຫນີຂໍ້ມູນການທ່ອງທ່ຽວແມ່ນອີງໃສ່ 6 ຫລັກການຂອງ ທ່ານ ຟຣີແມນ ທີວເດັນ (Tilden's six Interpretive Principles[10]) ເຊິ່ງມີລາຍລະອຽດດັ່ງນີ້:

**1) ການນຳສະເຫນີຂໍ້ມູນຕ້ອງມີຄວາມສອດຄ່ອງກັບປະສົບການຂອງນັກທ່ອງທ່ຽວ**

ການນຳສະເຫນີຂໍ້ມູນ ນອກຈາກອີງໃສ່ເລື່ອງລາວທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວແລ້ວ, ຈະຕ້ອງຄິດຕື່ມອີກວ່າ ນັກທ່ອງທ່ຽວຈະສາມາດເຂົ້າໃຈເລື່ອງລາວດັ່ງກ່າວໄດ້ບໍ່ ໂດຍອີງໃສ່ປະສົບການ ແລະ ຄວາມຮັບຮູ້ຂອງເຂົາເຈົ້າ. ຂໍ້ມູນທີ່ນຳສະເຫນີຈະຕ້ອງສອດຄ່ອງ ຫລື ສາມາດເຊື່ອມໂຍງກັບຊີວິດປະຈຳວັນຂອງນັກທ່ອງທ່ຽວ. ສະນັ້ນ, ການມີຄວາມເຂົ້າໃຈທີ່ເລິກເຊິ່ງກ່ຽວກັບນັກທ່ອງທ່ຽວຈຶ່ງມີຄວາມສຳຄັນໃນການອອກແບບການນຳສະເຫນີຂໍ້ມູນ ເຊິ່ງໄດ້ອະທິບາຍໃນບົດທີ 5 ກຸ່ມຕະຫລາດເປົ້າຫມາຍ.

**2) ການສະຫນອງພຽງແຕ່ຂໍ້ມູນຂ່າວສານ (Information) ແມ່ນຍັງບໍ່ຖືວ່າເປັນການນຳສະເຫນີ ຫລື ການອະທິບາຍຄວາມຫມາຍຂໍ້ມູນ (Interpretation)**

ການນຳສະເຫນີຂໍ້ມູນ ຫລື ການອະທິບາຍຄວາມຫມາຍ (Interpretation) ແມ່ນການເປີດເຜີຍເລື່ອງລາວຂອງສະຖານທີ່ທ່ອງທ່ຽວໂດຍນຳໃຊ້ຂໍ້ມູນຂ່າວສານ (Information) ທີ່ຖືກນຳມາວິເຄາະ ແລະ ຮຽບຮຽງໃຫມ່ໃຫ້ເຂົ້າໃຈງ່າຍ ແລະ ຫນ້າສົນໃຈຕໍ່ກຸ່ມຕະຫລາດເປົ້າຫມາຍ. ຂໍ້ມູນກ່ຽວກັບສະຖານທີ່ທ່ອງທ່ຽວ ຫລື ປະຫວັດຄວາມເປັນມາຂອງວັດທະນະທຳ ແລະ ຮີດຄອງປະເພນີ ສ່ວນໃຫຍ່ແມ່ນມີເນື້ອໃນທີ່ຍາວ ແລະ ເຕັມໄປດ້ວຍຄຳສັບເຕັກນິກ ຫລື ຄຳສັບທາງວິຊາການ ເຮັດໃຫ້ຄົນທົ່ວໄປເຂົ້າໃຈຍາກ. ການກະຕຸ້ນຄວາມສົນໃຈຂອງນັກທ່ອງທ່ຽວ ແມ່ນຕ້ອງກຳນົດໃຈຄວາມໃນການນຳສະເຫນີຂໍ້ມູນ (Theme) ຂອງສະຖານທີ່ທ່ອງທ່ຽວຂຶ້ນມາໃຫມ່ໃຫ້ມີຄວາມຫນ້າສົນໃຈ. ເລື່ອງລາວ ແລະ ໃຈຄວາມໃນການນຳສະເຫນີ ແມ່ນໄດ້ອະທິບາຍໄວ້ໃນບົດທີ 6 ແລະ 7.

**3) ການນຳສະເຫນີຂໍ້ມູນແມ່ນສິລະປະ (Art), ເຊິ່ງໂຮມເອົາຫລາກຫລາຍສິລະປະເຂົ້າກັນ.**

ການຕິດຕັ້ງພຽງແຕ່ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board) ຢູ່ສະຖານທີ່ທ່ອງທ່ຽວ ອາດຍັງບໍ່ສາມາດດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວທຸກຄົນໄດ້, ເນື່ອງຈາກເຂົາເຈົ້າມີວິທີການຮັບຮູ້ຂໍ້ມູນທີ່ແຕກຕ່າງກັນ. ບາງຄົນຮຽນຮູ້ຈາກການອ່ານ, ບາງຄົນຮຽນຮູ້ຈາກການຟັງ, ເບິ່ງ ຫລື ໄດ້ສຳພັດຕົວຈິງ. ສະນັ້ນ, ວິທີການນຳສະເຫນີຂໍ້ມູນ (Interpretive media and services) ໃນແຕ່ລະສະຖານທີ່ທ່ອງທ່ຽວ ຈະຕ້ອງກຳນົດໃຫ້ສອດຄ່ອງກັບແຕ່ລະກຸ່ມຕະຫລາດເປົ້າຫມາຍ.

[10] Interpreting Our Heritage, Freeman Tilden, Third Edition, Page 9, 1977

4) **ເປົ້າຫມາຍຂອງການນໍາສະເຫນີຂໍ້ມູນ ບໍ່ແມ່ນການສິດສອນ (Instruction), ແຕ່ເປັນການກະຕຸ້ນຄວາມຢາກຮູ້ຢາກເຫັນ ແລະ ຄວາມສົນໃຈຂອງນັກທ່ອງທ່ຽວ (Provocation).**

   ການກະຕຸ້ນໃຫ້ນັກທ່ອງທ່ຽວເກີດມີຄວາມສົນໃຈ ແລະ ຢາກຮູ້ລົງເລິກຕື່ມດ້ວຍຕົນເອງກ່ຽວກັບເລື່ອງລາວຂອງສະຖານທີ່ທ່ອງທ່ຽວ ນອກຈາກການສະຫນອງຂໍ້ມູນໃຫ້ແກ່ເຂົາເຈົ້າພຽງແຕ່ຝ່າຍດຽວ, ເປັນວິທີການສ້າງການມີສ່ວນຮ່ວມໃນການຊອກຫາຄໍາຕອບ ແລະ ເຮັດໃຫ້ນັກທ່ອງທ່ຽວຈົດຈໍາໄດ້ດີກວ່າ. ຕົວຢ່າງ, ໃນເນື້ອໃນການນໍາສະເຫນີຂໍ້ມູນຂອງສະຖານທີ່ທ່ອງທ່ຽວສາມາດລະບຸຄໍາວ່າ ຊອກຫາ (look for…), ລອງເບິ່ງຖ້າທ່ານສາມາດຊອກເຫັນ (see if you can find…), ທ່ານແນມເຫັນບໍ່ (can you see the…), ຈັບເປືອກຂອງຕົ້ນໄມ້ຢູ່ຫນ້າທ່ານເພື່ອໃຫ້ຮູ້ສຶກວ່າມັນຫນັກຊໍ່າໃດ (touch the bark on the tree in front of you, feel how heavy).

5) **ການນໍາສະເຫນີຂໍ້ມູນຄວນແນ່ໃສ່ການນໍາສະເຫນີຄວາມຫມາຍລວມ ຫລາຍກວ່າການນໍາສະເຫນີຄວາມຫມາຍແຕ່ສ່ວນໃດສ່ວນຫນຶ່ງ.**

   ຕົວຢ່າງ: ການນໍາສະເຫນີຂໍ້ມູນກ່ຽວກັບນໍ້າຕົກຕາດ, ບໍ່ຄວນນໍາສະເຫນີພຽງແຕ່ຊື່ ແລະ ຄວາມສູງຂອງນໍ້າຕົກ ແຕ່ຄວນອະທິບາຍຕື່ມອີກວ່າ ນໍ້າຕົກແຫ່ງນີ້ມີຕົ້ນນໍ້າມາຈາກໃສ, ມີສາຍນໍ້າໄຫລຜ່ານຈຸດໃດແດ່ ແລະ ມີຄວາມສໍາພັນແນວໃດຕໍ່ກັບສະພາບແວດລ້ອມອ້ອມຂ້າງເຊັ່ນ: ປະຊາຊົນທີ່ອາໄສໃນເຂດນີ້, ສັດປ່າ ແລະ ຕົ້ນໄມ້ໃບຫຍ້າ. ການນໍາສະເຫນີຂໍ້ມູນແບບນີ້ ຈະເຮັດໃຫ້ນັກທ່ອງທ່ຽວເຂົ້າໃຈຄວາມສໍາຄັນຂອງທໍາມະຊາດໄດ້ດີຂຶ້ນ[11].

6) **ການນໍາສະເຫນີຂໍ້ມູນໃຫ້ແກ່ເດັກນ້ອຍບໍ່ຄວນມີເນື້ອໃນຕ່າງກັນກັບຜູ້ໃຫຍ່ ແຕ່ຄວນໃຊ້ວິທີການນໍາສະເຫນີທີ່ຕ່າງກັນ**

   ເນື່ອງຈາກເດັກນ້ອຍມີພື້ນຖານຄວາມຮູ້ ແລະ ປະສົບການຫນ້ອຍກວ່າຜູ້ໃຫຍ່, ຄວາມສາມາດໃນການຈົດຈໍ່ສິ່ງໃດສິ່ງຫນຶ່ງເປັນເວລາດົນຂອງເຂົາເຈົ້າກໍ່ມີຈໍາກັດ. ສະນັ້ນ, ການນໍາສະເຫນີຂໍ້ມູນການທ່ອງທ່ຽວໃຫ້ແກ່ເດັກນ້ອຍ ຫລືນັກຮຽນ ຈະຕ້ອງນໍາໃຊ້ຄໍາສັບທີ່ງ່າຍ, ມີຄໍາອະທິບາຍທີ່ສັ້ນ ແລະ ເຂົ້າໃຈງ່າຍ, ມີຮູບພາບ, ກະຕຸ້ນໃຫ້ເຂົາເຈົ້າໄດ້ເຄື່ອນໄຫວ ແລະ ເຮັດກິດຈະກໍາ ເຊິ່ງຈະເຮັດໃຫ້ເຂົາເຈົ້າສາມາດເຂົ້າໃຈຂໍ້ມູນ ແລະ ໃຈຄວາມໃນການນໍາສະເຫນີເລື່ອງລາວໃນສະຖານທີ່ທ່ອງທ່ຽວ.

---

11 Sukhothai Thammathirat Open University, School of Management Science

## 5) ກຸ່ມຕະຫລາດເປົ້າຫມາຍ (Target Audiences)

ຄວາມເຂົ້າໃຈກ່ຽວກັບກຸ່ມຕະຫລາດເປົ້າຫມາຍ (Target Audiences) ເຮັດໃຫ້ສາມາດອອກແບບວິທີການນຳສະເຫນີຂໍ້ມູນທີ່ແທດເຫມາະກັບຄວາມຕ້ອງການ ແລະ ພຶດຕິກຳຂອງເຂົາເຈົ້າ. ກຸ່ມຕະຫລາດເປົ້າຫມາຍ ແມ່ນຄັດຈາກແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງວຽງຈັນ ສຳລັບປີ 2020 – 2025[12] ເຊິ່ງໄດ້ກຳນົດເປັນກະແສນັກທ່ອງທ່ຽວທີ່ມີຄຸນລັກສະນະ ແລະ ຄວາມສົນໃຈທີ່ແຕກຕ່າງກັນ.

ຕາຕະລາງ: ກຸ່ມຕະຫລາດເປົ້າຫມາຍນັກທ່ອງທ່ຽວແຂວງວຽງຈັນ

<table>
<tr><th>ລຳດັບ</th><th>ກຸ່ມຕະຫລາດເປົ້າຫມາຍ</th><th>ຄຸນລັກສະນະ</th><th>ການນຳສະເຫນີຂໍ້ມູນ</th></tr>
<tr><td>1</td><td>ກະແສນັກທ່ອງທ່ຽວພາຍໃນທ້າຍອາທິດທ່ຽວເຂດອ່າງນໍ້າງື່ມ</td><td>○ ຄົນລາວ ແລະ ຕ່າງປະເທດທີ່ເຮັດວຽກຢູ່ລາວ ໂດຍສະເພາະແມ່ນຢູ່ນະຄອນຫລວງວຽງຈັນ, ນະຄອນຫລວງພະບາງ ແລະ ພາກໃຕ້ຂອງລາວ. ເດີນທາງມາທ່ອງທ່ຽວເຂດອ່າງນໍ້າງື່ມ ດ້ວຍລົດສ່ວນຕົວກັບຄອບຄົວ, ຍາດຕິພີ່ນ້ອງ, ຫມູ່ຄູ່ ແລະ ເພື່ອນຮ່ວມງານ. ລ່ອງເຮືອກິນເຂົ້າເຂດອ່າງນໍ້າງື່ມສຳພັດທິວທັດທາງທຳມະຊາດ, ຊື້ເຄື່ອງຫັດຖະກຳຕາມເກາະດອນ, ຂີ່ເຈດສະກີ ແລະ ເຮືອບາງລຳກໍ່ມີບໍລິການເຄື່ອງຫລີ້ນສະໄລເດີ້.</td><td>○ ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ພາຍໃນສະຖານທີ່ທ່ອງທ່ຽວ, ນຳໃຊ້ພາສາລາວ ແລະ ພາສາອັງກິດ ຫລື ສັນຍາລັກສາກົນ<br>○ ນຳໃຊ້ເຕັກໂນໂລຊີໃນການຊ່ວຍໃຫ້ເຂົ້າເຖິງສະຖານທີ່ທ່ອງທ່ຽວ ເປັນຕົ້ນແມ່ນແຜນທີ່ອອນລາຍ Google maps</td></tr>
<tr><td>2</td><td>ກະແສນັກທ່ອງທ່ຽວຈີນມາເປັນກຸ່ມທ່ຽວເຂດອ່າງນໍ້າງື່ມ</td><td>○ ເດີນທາງມາເປັນຫມູ່ຄະນະກັບບໍລິສັດທ່ອງທ່ຽວດ້ວຍລົດເມໃຫຍ່ ຈາກນະຄອນຫລວງວຽງຈັນ. ລ່ອງເຮືອຊົມທິວທັດທຳມະຊາດຢູ່ແຄມສະຫວັນນໍ້າງື່ມຣີສອດ, ຂີ່ເຈັດສະກີ, ພາຍເຮືອກາຢັກ, ຫລີ້ນກາຊີໂນ, ຕີກ໋ອບ, ໃຊ້ບໍລິການນວດ ແລະ ສະປາ. ສ່ວນໃຫຍ່ແມ່ນພັກເຊົາຢູ່ແຄມສະຫວັນນໍ້າງື່ມຣີສອດ ແລ້ວເດີນທາງມາລ່ອງເຮືອກິນເຂົ້າຢູ່ເຂດອ່າງນໍ້າງື່ມ.</td><td rowspan="2">○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບ່ອນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານນຳທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈຳນວນຫລາຍ<br>○ ເນື້ອໃນຂອງປ້າຍເປັນພາສາລາວ ແລະ ພາສາອັງກິດ, ໂດຍໃຫ້ພະນັກງານນຳທ່ຽວຄົນລາວອະທິບາຍໃຫ້ແກ່ຫົວຫນ້າພະນັກງານນຳທ່ຽວ<br>○ ມີບ່ອນນັ່ງພັກເຊົາສຳລັບຜູ້ສູງອາຍຸ<br>○ ໃຊ້ເວລາບໍ່ດົນໃນການທຳຄວາມເຂົ້າໃຈເລື່ອງລາວ<br>○ ບັນຈຸເນື້ອໃນ ແລະ ວິທີການນຳສະເຫນີຂໍ້ມູນເຂົ້າໃນຫລັກສູດການຝຶກອົບຮົມພະນັກງານນຳທ່ຽວ</td></tr>
<tr><td>3</td><td>ກະແສນັກທ່ອງທ່ຽວເກົາຫລີມາເປັນກຸ່ມທ່ຽວເຂດອ່າງນໍ້າງື່ມ</td><td>○ ເດີນທາງມາເປັນຫມູ່ຄະນະກັບບໍລິສັດທ່ອງທ່ຽວຈາກນະຄອນຫລວງວຽງຈັນດ້ວຍລົດຕູ້ນ້ອຍ, ທ່ອງທ່ຽວເຂດອ່າງນໍ້າງື່ມ, ລ່ອງເຮືອຮັບປະທານອາຫານເພື່ອຊົມທິວທັດທຳມະຊາດ, ບາງຈຳນວນກໍ່ພັກເຊົາຢູ່ທີ່ພັກໃນເຂດອ່າງນໍ້າງື່ມ. ນອກຈາກນັ້ນ, ບາງຄະນະກໍ່ເຮັດກິດຈະກຳຢູ່ແຄມສະຫວັນນໍ້າງື່ມຣີສອດ ເຊັ່ນ: ຂີ່ເຈດສະກີ, ລ່ອງເຮືອ, ພາຍເຮືອ, ຕີກ໋ອບ, ໃຊ້ບໍລິການນວດ ແລະ ສະປາ.</td></tr>
</table>

[12] ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງວຽງຈັນ ສຳລັບປີ 2020 – 2025, ຫນ້າທີ 7 – 54, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2020

| | | | |
|---|---|---|---|
| 4 | ກະແສນັກທ່ອງທ່ຽວໄທມາເປັນກຸ່ມທ່ຽວເຂດອ່າງນ້ຳງື່ມ | ○ ເດີນທາງມາເປັນຫມູ່ຄະນະຈາກນະຄອນຫລວງວຽງຈັນ ເພື່ອມາທ່ອງທ່ຽວແດນສະຫວັນນ້ຳງື່ມ ຣີສອດ, ເຮັດກິດຈະກຳເຈັດສະກີ, ລ່ອງເຮືອ. ບາງຄະນະກໍ່ທ່ອງທ່ຽວເຂດອ່າງນ້ຳງື່ມ ເພື່ອລ່ອງເຮືອຮັບປະທານອາຫານ. ຊື້ເຄື່ອງຫັດຖະກຳຢູ່ເກາະດອນ ແລະ ຮ້ານຫັດຖະກຳປ້າຄຳແສນ. ສ່ວນໃຫຍ່ແມ່ນໄວກາງຄົນ ແລະ ຜູ້ສູງອາຍຸ. ມັກຄວາມມ່ວນຊື່ນບັນເທີງ ຢູ່ຕາມສະຖານທີ່ທ່ອງທ່ຽວ ແລະ ໃນຂະນະເດີນທາງ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບ່ອນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານນຳທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈຳນວນຫລາຍ<br>○ ເນື້ອໃນຂອງປ້າຍເປັນພາສາລາວ, ເພື່ອໃຫ້ພະນັກງານນຳທ່ຽວຄົນລາວ ນຳໃຊ້ເພື່ອອະທິບາຍໃຫ້ແກ່ນັກທ່ອງທ່ຽວ.<br>○ ມີບ່ອນນັ່ງພັກເຊົາສຳລັບຜູ້ສູງອາຍຸ<br>○ ໃຊ້ເວລາບໍ່ດົນໃນການທຳຄວາມເຂົ້າໃຈເລື່ອງລາວ<br>○ ນຳໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວໃນການນຳສະເຫນີຂໍ້ມູນເຊັ່ນ: TripAdvisor ແລະ ເວັບໄຊທ່ອງທ່ຽວລາວ. ສາມາດບັນຈຸເປັນພາສາໄທໄດ້, ເພື່ອຄວາມສະດວກຂອງນັກທ່ອງທ່ຽວ. |
| 5 | ກະແສນັກທ່ອງທ່ຽວສາກົນມາເປັນກຸ່ມນ້ອຍທ່ຽວເຂດອ່າງນ້ຳງື່ມ | ○ ເດີນທາງມາເປັນກຸ່ມນ້ອຍດ້ວຍລົດຕູ້ຈາກນະຄອນຫລວງວຽງຈັນ ໂດຍການຊື້ລາຍການທ່ອງ ທ່ຽວລາຍວັນ. ທ່ອງທ່ຽວເຂດອ່າງນ້ຳງື່ມ ຂຶ້ນທາງເຂື່ອນໄຟຟ້າ, ລ່ອງເຮືອຮັບປະທານອາຫານ ແລະ ພັກຢູ່ທີ່ພັກເຂດອ່າງນ້ຳງື່ມ ເພື່ອຊົມທິວທັດທຳມະຊາດ. ແວ່ຊື້ສິນຄ້າຫັດຖະກຳປ້າຄຳແສນກ່ອນເດີນທາງກັບນະຄອນຫລວງວຽງຈັນ. | ○ ເນື້ອໃນຂອງປ້າຍເປັນພາສາລາວ ແລະ ພາສາອັງກິດ<br>○ ມີບ່ອນນັ່ງພັກເຊົາສຳລັບຜູ້ສູງອາຍຸ<br>○ ບັນຈຸເນື້ອໃນ ແລະ ວິທີການນຳສະເຫນີຂໍ້ມູນເຂົ້າໃນຫລັກສູດການຝຶກອົບຮົມພະນັກງານນຳທ່ຽວມໍລະດົກ |
| 6 | ກະແສນັກທ່ອງທ່ຽວໃນຮູບແບບກອງປະຊຸມສຳມະນາຢູ່ເຂດອ່າງນ້ຳງື່ມ (MICE) | ○ ຜູ້ເຂົ້າຮ່ວມກອງປະຊຸມຈາກພາກລັດ, ພາກທຸລະກິດ ແລະ ໂຄງການ ເດີນທາງມາປະຊຸມ ຈາກນະຄອນຫລວງວຽງຈັນ. ເດີນທາງມາດ້ວຍລົດສ່ວນຕົວ, ລົດເມ ຫລື ລົດຕູ້. ສະຖານທີ່ປະຊຸມແມ່ນປະກອບມີ ແດນສະຫວັນນ້ຳງື່ມຣີສອດ, ຫ້ອງປະຊຸມຂອງໄຟຟ້າລາວ, ສູນວັດທະນະທຳ, ຣີສອດນາປ່າກວາງ ແລະ ລ່ອງງື່ມວິວຣີສອດ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບໍລິເວນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານນຳທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈຳນວນຫລາຍ |
| 7 | ກະແສນັກທ່ອງທ່ຽວໄທມາທາງດ່ານຊະນະຄາມ | ○ ຄົນໄທເດີນທາງຂ້າມດ່ານຈາກອຳເພີຊຽງຄານຈັງຫວັດເລີຍ ຫາເມືອງຊະນະຄາມ ເພື່ອມາທ່ຽວຊົມ ແລະ ເຮັດບຸນຢູ່ວັດຜາທຶດ, ວັດສັງຄະເທນ, ວັດປາກມີ້, ວັດແສນ ແລະ ວັດສະຫວ່າງ. ເດີນທາງພາຍໃນຕົວເມືອງຊະນະຄາມດ້ວຍສາມລໍ້. ບາງຈຳນວນກໍ່ໄປເລາະຕະຫລາດສົດ. ສຸດທ້າຍແມ່ນກັບມານອນຢູ່ຊຽງຄານ. | ○ ນຳໃຊ້ເຕັກໂນໂລຊີໃນການຊ່ວຍໃຫ້ເຂົ້າເຖິງສະຖານທີ່ທ່ອງທ່ຽວ ເປັນຕົ້ນແມ່ນແຜນທີ່ອອນລາຍ Google maps<br>○ ນຳໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວໃນການນຳສະເຫນີຂໍ້ມູນເຊັ່ນ: TripAdvisor ແລະ ເວັບໄຊທ່ອງທ່ຽວລາວ. |

## 6) ສະຖານທີ່ທ່ອງທ່ຽວ ແລະ ເລື່ອງລາວ (Site and Stories)

ສະຖານທີ່ທ່ອງທ່ຽວພາຍໃນແຂວງວຽງຈັນ ທີ່ກຳນົດໃນແຜນຍຸດທະສາດນຳສະເຫນີຂໍ້ມູນການທ່ອງທ່ຽວສະບັບນີ້ ແມ່ນອີງໃສ່ກະແສນັກທ່ອງທ່ຽວໃນແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງວຽງຈັນ ສຳລັບປີ 2020 – 2025[13]. ເລື່ອງລາວໃນການນຳສະເຫນີແມ່ນສິ່ງທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວ, ຈຸດຂາຍທີ່ເປັນເອກະລັກຂອງສະຖານທີ່ທ່ອງທ່ຽວ (Unique Selling Point – USP) ເຊັ່ນ: ພູທີ່ສູງທີ່ສຸດ, ວິວທີ່ງາມທີ່ສຸດ, ປາທີ່ຫາຍາກທີ່ສຸດ, ຫໍພິພິດຕະພັນທີ່ວາງສະແດງວັດຖຸບູຮານທີ່ຫາເບິ່ງໄດ້ຍາກ ແລະ ອື່ນໆ. ເລື່ອງລາວໃນການນຳສະເຫນີແມ່ນຈະຖືກນຳໃຊ້ເຂົ້າໃນການກຳນົດໃຈຄວາມໃນການນຳສະເຫນີ (Theme) ໃນບົດຕໍ່ໄປ.

### 6.1) ເມືອງທຸລະຄົມ

| ລ/ດ | ສະຖານທີ່ | ສະພາບປັດຈຸບັນ | ເລື່ອງລາວ ໃນການນຳສະເຫນີ |
|---|---|---|---|
| | ເມືອງທຸລະຄົມ | | |
| 1 | ໂຮງງານຜະລິດເກືອບ້ານບໍ່ກາເພັດ (Banbo Salt Mine)  | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[14] ແລະ ໃນ TripAdvisor. ສ່ວນໃຫຍ່ແມ່ນນອນຢູ່ໃນລາຍການທ່ອງທ່ຽວຂອງບໍລິສັດທີ່ນຳພານັກທ່ອງທ່ຽວມາເປັນກຸ່ມ, ໂດຍສະເພາະແມ່ນນັກທ່ອງທ່ຽວສາກົນ ແລະ ພາກພື້ນ (ຍົກເວັ້ນນັກທ່ອງທ່ຽວໄທ).<br>○ ມີປ້າຍຊື່ແຕ່ລະຂັ້ນຕອນການຜະລິດເປັນພາສາລາວ ແລະ ອັງກິດ, ແຕ່ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວ. | ○ ປະຫວັດຄວາມເປັນມາຂອງບໍ່ເກືອ<br>○ ຄວາມສຳພັນຂອງເກືອກັບການປຸງແຕ່ງອາຫານທ້ອງຖິ່ນ<br>○ ຂັ້ນຕອນການຜະລິດເກືອ |
| 2 | ອາຄານເກົ່າສະໄຫມຝລັ່ງ (Colonial Building)  | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[15], ໃນ TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ. ເນື່ອງຈາກບໍ່ທັນໄດ້ກຳນົດເປັນສະຖານທີ່ທ່ອງທ່ຽວ. | ○ ປະຫວັດຄວາມເປັນມາຂອງອາຄານເກົ່າສະໄຫມຝລັ່ງ |

[13] ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງວຽງຈັນ ສຳລັບປີ 2020 – 2025, ຫນ້າທີ 7 – 54, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2020

[14] https://goo.gl/maps/pJ4J9htQgH4ap8Uh6

[15] https://goo.gl/maps/HyRXry6J2ZdGoqsi9

| ລ/ດ | ສະຖານທີ່ | ສະພາບປັດຈຸບັນ | ເລື່ອງລາວ ໃນການນຳສະເຫນີ |
|---|---|---|---|
| 3 | ເດີ່ນບິນເກົ່າບ້ານເກີນ (Old Airstrip in Ban Keun)<br> | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[16], ໃນ TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ. ເນື່ອງຈາກບໍ່ທັນໄດ້ກຳນົດເປັນສະຖານທີ່ທ່ອງທ່ຽວ.<br>○ ຂໍ້ມູນທີ່ຕັ້ງຂອງເດີ່ນບິນ: Former Lima Site LS 44[17] | ○ ປະຫວັດຄວາມເປັນມາຂອງເດີ່ນບິນເກົ່າບ້ານເກີນ. ຄວາມສຳພັນຂອງເດີ່ນບິນເກົ່າກັບສະຫະລັດອາເມລິກາ ແລະ ສົງຄາມຫວຽດນາມ[18]. |
| 4 | ທຳສີລາຈາລຶກວິລະບູລຸດ ນັກຮົບປະສົມລາວ - ຫວຽດ<br> | ○ ບໍ່ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[19] ແລະໃນ TripAdvisor<br>○ ມີປ້າຍປະຫວັດແຫລ່ງທ່ອງທ່ຽວກ່ຽວກັບສະຖານ ທີ່ທ່ອງທ່ຽວ, ແຕ່ເປັນພາສາລາວ ແລະ ພາສາຫວຽດ ນັບທັງປ້າຍຊື່ສະຖານທີ່. ເນື້ອໃນຂອງປ້າຍກໍ່ຍັງບໍ່ທັນກຳນົດໃຈ ຄວາມໃນການນຳສະເຫນີທີ່ຊັດເຈນ. | ○ ປະຫວັດຄວາມເປັນມາ: ເພື່ອປ້ອງກັນນະຄອນຫລວງວຽງຈັນໃນປີ 1946 ກອງກຳລັງສູ້ຮົບປະສົມລາວຫວຽດໄດ້ພ້ອມກັນບຸກໂຈມຕີຖານທີ່ຕັ້ງຂອງພວກລ່າເມືອງຂຶ້ນຝລັ່ງ.<br>○ ເລື່ອງລາວຂອງບໍ່ນຳສ້າງ, ກວງູນແລະສີລາຈາລຶກ |
| 5 | ວັດວຽງພຣະແກ້ວ (Vat Viengprakeo)<br> | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[20], ໃນ TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີຮ່ອງຮອຍຄອງນ້ຳທີ່ໃຊ້ເປັນກຳແພງປ້ອງກັນການໂຈມຕີຂອງສັດຕູໃນສະໄຫມກ່ອນ | ○ ປະຫວັດຄວາມເປັນມາຂອງວັດວຽງພຣະແກ້ວ<br>○ ເລື່ອງລາວກ່ຽວກັບທີ່ພັກຂອງທະຫານ (Military Camps) ຂອງເຈົ້າໄຊເສດຖາໃນປີ 1556[21]<br>○ ຄວາມສຳພັນຂອງວັດກັບພຣະແກ້ວມໍລະກົດ |
| 6 | ວັດພະທາດມາຫລ້າ (Vat Phathat Mala)<br> | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[22], ໃນ TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ສ້າງຂຶ້ນໃນປີ 1590, ຈັດງານບຸນພະທາດມາຫລ້ານີ້ຂຶ້ນທຸກປີໃນຊ່ວງເວລາດຽວກັນກັບບຸນພະທາດຫລວງ[23] | ○ ປະຫວັດຄວາມເປັນມາຂອງພະທາດມາຫລ້າ<br>○ ເລື່ອງລາວທີ່ຕິດພັນກັບພະທາດຫລວງຢູ່ນະຄອນ ຫລວງວຽງຈັນສະໄຫມເຈົ້າໄຊເສດຖາທິລາດ[24]. |

16 https://goo.gl/maps/kw1Lg4pwvKVpGTef9
17 http://wikimapia.org/9886645/Old-air-strip-in-Ban-Keun-village
18 Historical Dictionary of Air Intelligence, page 105, Glenmore S. Trenear-Harvey, 2009
19 https://goo.gl/maps/Jz5KLBznGEqmizQW9
20 https://goo.gl/maps/QYNLC3ChFcbgJ8rcA
21 Preserving Impermanence, The Creation of Heritage in Vientiane, Laos, Page 159, Anna Karlstrom, Department of Archaeology and Ancient History, Uppsala University, Sweden, 2009
22 https://goo.gl/maps/wzPH8t7XLpeFyU7J9
23 http://laogov.gov.la/province/Pages/Provincetourism.aspxfa?CateID=8&ItemID=234&MenuID=6
24 http://keopaserd.blogspot.com/2018/04/blog-post_41.html

| ລ/ດ | ສະຖານທີ່ | ສະພາບປັດຈຸບັນ | ເລື່ອງລາວໃນການນຳສະເໜີ |
|---|---|---|---|
| 7 | ວັດຫລິ່ງຊັນໃຕ້ (Vat Lingxan Tai)  | ○ ມີຂໍ້ມູນເບື້ອງຕົ້ນຢູ່ໃນແຜນທີ່ອອນລາຍ Google Maps[25], ແຕ່ບໍ່ມີຂໍ້ມູນໃນ TripAdvisor ແລະ ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີພະທອງສາມສີ, ເຮືອບູຮານ ແລະ ຫໍໄຕທີ່ສ້າງໃໝ່ | ○ ເລື່ອງລາວຂອງພະທອງສາມສີ ພະພຸດທະຮູບສັກສິດ ແລະ ການຄົ້ນພົບເຮືອບູຮານຢູ່ນ້ຳງື່ມ<br>○ ວິທີການອະທິຖານ ແລະ ຂໍພອນ |
| 8 | ວັດຫລິ່ງຊັນກາງ (Vat Lingxan Kang)  | ○ ມີຂໍ້ມູນເບື້ອງຕົ້ນຢູ່ໃນແຜນທີ່ອອນລາຍ Google Maps[26], ແຕ່ບໍ່ມີຂໍ້ມູນໃນ TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີສິມເກົ່າສ້າງຂຶ້ນໃນສະໄໝເຈົ້າໄຊເສດຖາ, ວັດຖຸບູຮານ, ເຕົາຫລອມພະບູຮານ, ພະທອງດຳ, ຮອຍພະບາດແລະຫໍກອງ | ○ ປະຫວັດຄວາມເປັນມາຂອງວັດຫລິ່ງຊັນກາງ<br>○ ເລື່ອງລາວກ່ຽວກັບເຕົາຫລອມພະບູຮານ, ພະທອງດຳ, ຮອຍພະບາດ, ຫໍກອງແລະວັດຖຸບູຮານພາຍໃນສິມ |

## 6.2) ເມືອງວຽງຄຳ

| ລ/ດ | ສະຖານທີ່ | ສະພາບປັດຈຸບັນ | ເລື່ອງລາວໃນການນຳສະເໜີ |
|---|---|---|---|
| 1 | ວັດປ່າໄຜ່ໜາມເຈົ້າຟ້າງຸ່ມ<br>(Vat Pa Phai Nam Chao Fa Ngum)  | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[27], TripAdvisor ແລະ ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີພະພຸດທະຮູບເກົ່າແກ່ ແລະ ໃບສີມາ (Bai sema) ແທ່ນຫີນໝາຍເຂດແດນໃນສະໄໝກ່ອນ<br>○ ມີການຄົ້ນພົບວັດຖຸບູຮານຈຳນວນຫລາຍ, ແຕ່ປັດຈຸບັນຖືກເກັບມ້ຽນຢູ່ເຮືອນຂອງປະຊາຊົນຜູ້ຄົ້ນພົບ<br>○ ເປັນບ່ອນປະຕິບັດທຳວິປັດສະນາກຳມະຖານ | ○ ປະຫວັດຄວາມເປັນມາຂອງວັດປ່າໄຜ່ໜາມເຈົ້າຟ້າງຸ່ມ<br>○ ເລື່ອງລາວກ່ຽວກັບການເຄື່ອນຍ້າຍພະບາງຈາກກຳປູເຈຍຫານະຄອນຫລວງພະບາງສະໄໝເຈົ້າຟ້າງຸ່ມ[28]<br>○ ເລື່ອງລາວກ່ຽວກັບໃບສີມາ |

25 https://goo.gl/maps/37m2S2w7Nihh7Sey7
26 https://goo.gl/maps/AD61FRQQ5Hkx3hSs7
27 https://goo.gl/maps/hHWYw478CAoGuc1p9
28 Preserving Impermanence, The Creation of Heritage in Vientiane, Laos, Page 167, Anna Karlstrom, Department of Archaeology and Ancient History, Uppsala University, Sweden, 2009

## 6.3) ເມືອງແກ້ວອຸດົມ

| ລ/ດ | ສະຖານທີ່ | ສະພາບປັດຈຸບັນ | ເລື່ອງລາວ ໃນການນຳສະເຫນີ |
|---|---|---|---|
| 1 | ເຂື່ອນໄຟຟ້ານ້ຳງື່ມ 1 (nam Ngum 1 Dam)<br> | ○ ມີຂໍ້ມູນເບື້ອງຕົ້ນຢູ່ໃນແຜນທີ່ອອນລາຍ Google Maps[29]. ແຕ່ຂໍ້ມູນໃນ TripAdvisor[30] ສ່ວນໃຫຍ່ແມ່ນກ່ຽວກັບການລ່ອງເຮືອຢູ່ອ່າງນ້ຳງື່ມ.<br>○ ມີການນຳສະເຫນີຂໍ້ມູນເບື້ອງຕົ້ນກ່ຽວກັບໄລຍະ ແລະ ຜູ້ຮ່ວມທຶນຂອງໂຄງການສ້າງເຂື່ອນຢູ່ຈຸດຊົມວິວ, ແຕ່ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ. | ○ ຄວາມສຳຄັນຂອງເຂື່ອນໄຟຟ້ານ້ຳງື່ມໃນການຜະລິດກະແສໄຟຟ້າ ແລະ ສ້າງລາຍຮັບໃຫ້ແກ່ປະເທດ.<br>○ ຂັ້ນຕອນການຜະລິດກະແສໄຟຟ້າພະລັງນ້ຳ<br>○ ເລື່ອງລາວຂອງການຍົກຍ້າຍຊຸມຊົນໄລຍະການສ້າງເຂື່ອນ |
| 2 | ອ່າງນ້ຳງື່ມ (Nam Ngum Reservior)<br> | ○ ມີຂໍ້ມູນເບື້ອງຕົ້ນຢູ່ໃນແຜນທີ່ອອນລາຍ Google Maps[31] ແລະ ໃນ TripAdvisor[32].<br>○ ມີສູນຂໍ້ມູນຂ່າວສານການທ່ອງທ່ຽວເມືອງແກ້ວອຸດົມ, ແຕ່ຂໍ້ມູນສ່ວນໃຫຍ່ແມ່ນກ່ຽວກັບສະຖານທີ່ທ່ອງທ່ຽວຂອງແຕ່ລະເມືອງ, ບໍ່ທັນມີກ່ຽວກັບອ່າງນ້ຳງື່ມ. | ○ ຄວາມສຳພັນຂອງອ່າງນ້ຳງື່ມ ແລະ ການດຳລົງຊີວິດຂອງຄົນທ້ອງຖິ່ນ<br>○ ຄວາມອຸດົມສົມບູນຂອງທຳມະຊາດໃນເຂດອ່າງນ້ຳງື່ມ<br>○ ກິດຈະກຳການທ່ອງທ່ຽວເຂດອ່າງນ້ຳງື່ມ |
| 3 | ສູນຂໍ້ມູນຂ່າວສານການທ່ອງທ່ຽວເມືອງແກ້ວອຸດົມ<br> | ○ ບໍ່ມີຂໍ້ມູນໃນແຜນທີ່ອອນລາຍ Google Maps[33]<br>○ ການນຳສະເຫນີຂໍ້ມູນພາຍໃນສູນແມ່ນກ່ຽວກັບສະຖານທີ່ທ່ອງທ່ຽວຢູ່ແຕ່ລະເມືອງຂອງແຂວງວຽງຈັນ. ບໍ່ທັນມີຂໍ້ມູນສະເພາະເຂດອ່າງນ້ຳງື່ມ | ○ ເລື່ອງລາວ ແລະ ເສັ້ນທາງການທ່ອງທ່ຽວຕາມ 4 ຕົວເມືອງທີ່ກຳນົດໃນແຜນຍຸດທະສາດການນຳສະເຫນີຂໍ້ມູນສະບັບນີ້<br>○ ຄວາມສຳພັນຂອງອ່າງນ້ຳງື່ມ ແລະ ການດຳລົງຊີວິດຂອງຄົນທ້ອງຖິ່ນ |

29 https://goo.gl/maps/WQPchyJqSWjeyMhJ9
30 https://www.tripadvisor.com/Attraction_Review-g2000000-d9606093-Reviews-Nam_Ngum_Dam-Thalat_Vientiane_Province.html
31 https://goo.gl/maps/WQPchyJqSWjeyMhJ9
32 https://www.tripadvisor.com/Attraction_Review-g2000000-d9606093-Reviews-Nam_Ngum_Dam-Thalat_Vientiane_Province.html
33 https://goo.gl/maps/AVjR68cMEYLeCWS5A

## 6.4) ເມືອງໂພນໂຮງ

| ລ/ດ | ສະຖານທີ່ | ສະພາບປັດຈຸບັນ | ເລື່ອງລາວ ໃນການນຳສະເໜີ |
|---|---|---|---|
| 1 | ສູນຫັດຖະກຳບ້ານນາບອນ<br>(Nabone Handicraft Center)<br> | ○ ມີຂໍ້ມູນເບື້ອງຕົ້ນຢູ່ໃນແຜນທີ່ອອນລາຍ Google Maps[34], ແຕ່ບໍ່ມີຂໍ້ມູນໃນ TripAdvisor.<br>○ ການນຳສະເໜີຂໍ້ມູນຢູ່ພາຍໃນສູນແມ່ນສະແດງດ້ວຍຮູບພາບຂອງກິດຈະກຳ, ໂດຍມີເຈົ້າຂອງສູນເປັນຜູ້ບັນລະຍາຍ. | ○ ປະຫວັດຄວາມເປັນມາຂອງສູນຫັດຖະກຳ<br>○ ວິຖີຊີວິດຂອງຄົນທ້ອງຖິ່ນ ແລະ ຄວາມສຳພັນກັບທຳມະຊາດ<br>○ ເລື່ອງລາວກ່ຽວກັບຫັດຖະກຳຈັກສານໄມ້ປ່ອງ |
| 2 | ວັງຊ້າງ (Vang Xang)<br> | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[35], TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ນອນຢູ່ໃນລາຍການທ່ອງທ່ຽວຂອງບໍລິສັດທ່ອງທ່ຽວທີ່ເນັ້ນໃສ່ນັກທ່ອງທ່ຽວສາກົນທີ່ມາເປັນກຸ່ມນ້ອຍ. | ○ ປະຫວັດຄວາມເປັນມາຂອງວັງຊ້າງ<br>○ ເລື່ອງລາວຂອງທາງຊ້າງ ແລະ ການຄ້ອງຊ້າງໃນສະໄໝບູຮານ<br>○ ເລື່ອງລາວຂອງພະພຸດທະຮູບ |
| 3 | ວັດພະທາດດອນແກ້ວ<br>(Vat Phathat Donkeo)<br> | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[36], TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ຂາດການບົວລະບັດຮັກສາເລື່ອງຄວາມສະອາດພາຍໃນວັດ ແລະ ສະຖານທີ່ສະແດງບັ້ງໄຟ ແລະ ນ້ຳສ້າງສັກສິດ | ○ ປະຫວັດຄວາມເປັນມາຂອງພະທາດດອນແກ້ວ<br>○ ເລື່ອງລາວຂອງບັ້ງໄຟ ແລະ ບໍ່ນ້ຳສ້າງ |
| 4 | ສູນຫັດຖະກຳຈັກສານກຸ່ມບ້ານນາເຫລົ່າ<br>(Na Lao Village Cluster Bamboo Handicraft Center)<br> | ○ ບໍ່ມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps[37], TripAdvisor ແລະ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ສະພາບພາຍໃນສູນແມ່ນຍັງຕ້ອງປັບປຸງຂຶ້ນຕື່ມເຊັ່ນ: ການຈັດວາງຂອດການຜະລິດ ແລະ ວາງສະແດງສິນຄ້າ, ທາງຍ່າງ ແລະ ສິ່ງອຳນວຍຄວາມສະດວກ. | ○ ຄວາມສຳພັນຂອງຫັດຖະກຳຈັກສານ ແລະ ຕ່ຳຫູກທໍໄໝ ກັບວິຖີຊີວິດຂອງຄົນທ້ອງຖິ່ນ,ໂດຍສະເພາະແມ່ນແມ່ຍິງ.<br>○ ຂັ້ນຕອນການຕ່ຳຫູກທໍໄໝທີ່ເປັນເອກະລັກຂອງຄົນທ້ອງຖິ່ນ |

[34] https://goo.gl/maps/eVZBSc9tYmHeEirt8
[35] https://goo.gl/maps/jPbxWMQFhkBvZ3tD9
[36] https://goo.gl/maps/DftHrEmmy826PZeR6
[37] https://goo.gl/maps/zqtNT1R7WXQgLWdb6

## 7) ໃຈຄວາມໃນການນຳສະເໜີ (Theme)

ໃຈຄວາມໃນການນຳສະເໜີ (Theme, ອ່ານວ່າ "ຕີມ") ແມ່ນໃຈຄວາມສຳຄັນ ຫລື ປະເດັນຫລັກໃນການນຳສະເໜີຂໍ້ມູນ ຫລື ເລື່ອງລາວຂອງສະຖານທີ່ທ່ອງທ່ຽວ (Central concept or key idea of any presentation[38]), ມັນແມ່ນສິ່ງທີ່ນັກທ່ອງທ່ຽວຈະຈົດຈຳພາຍຫລັງຢ້ຽມຢາມສະຖານທີ່ທ່ອງທ່ຽວ. ເຂົາເຈົ້າອາດຈະລືມວ່າວັດແຫ່ງນີ້ສ້າງຂຶ້ນໃນປີໃດ ແລະ ໃຜເປັນຜູ້ສ້າງ, ແຕ່ຈະຈົດຈຳຄວາມໝາຍຄວາມສຳຄັນຂອງວັດທີ່ມີຕໍ່ວິຖີຊີວິດຂອງຄົນທ້ອງຖິ່ນ. ອີງໃສ່ຫລັກການໃນການນຳສະເໜີຂໍ້ມູນໃນບົດທີ 4 (Guiding Principle), ການກະຕຸ້ນຄວາມສົນໃຈຂອງນັກທ່ອງທ່ຽວ ແມ່ນຕ້ອງສ້າງໃຈຄວາມໃນການນຳສະເໜີ ຫລື ແກ່ນຂອງເລື່ອງລາວ (Theme) ທີ່ໜ້າສົນໃຈ ແລະ ມີຄຸນຄ່າ.

| Main Theme | | |
|---|---|---|
| ແຂວງວຽງຈັນ ມີມໍລະດົກທາງດ້ານວັດທະນະທຳທີ່ເປັນເອກະລັກ, ມີທຳມະຊາດທີ່ສວຍງາມທີ່ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ ແລະ ມີເລື່ອງລາວທາງປະຫວັດສາດທີ່ຕິດພັນກັບຫລາຍຍຸກຫລາຍສະໄໝ | | |
| ວັດທະນະທຳ | ທຳມະຊາດ | ປະຫວັດສາດ |
| ແຂວງວຽງຈັນ ມີມໍລະດົກທາງດ້ານວັດທະນະທຳທີ່ເປັນເອກະລັກ, ມີຄຸນຄ່າ ແລະ ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ. | ແຂວງວຽງຈັນ ມີທຳມະຊາດທີ່ສວຍງາມ, ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ ແລະ ສາມາດສ້າງເປັນພະລັງງານໄຟຟ້າທີ່ສະອາດ. | ແຂວງວຽງຈັນ ມີປະຫວັດຄວາມເປັນມາທີ່ຍາວນານ ແລະ ຕິດພັນກັບເລື່ອງລາວທາງປະຫວັດສາດຫລາຍຍຸກຫລາຍສະໄໝ |
| > ວັດວາອາຮາມ<br>> ພະພຸດທະຮູບສັກສິດ<br>> ວິຖີຊີວິດຂອງຄົນທ້ອງຖິ່ນ<br>> ອາຫານທ້ອງຖິ່ນ<br>> ຫັດຖະກຳ<br>> ສິລະປະການຟ້ອນລາຍງ້າວ | > ທິວທັດທຳມະຊາດອ່າງນ້ຳງື່ມ<br>> ເກາະດອນ<br>> ປ່າສະຫງວນ<br>> ນ້ຳງື່ມ<br>> ຄວາມສຳພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ | > ຮ່ອງຮອຍສະໄໝເຈົ້າຟ້າງຸ່ມ<br>> ຮ່ອງຮອຍສະໄໝເຈົ້າໄຊເສດຖາ<br>> ຮ່ອງຮອຍເສິກສົງຄາມສະໄໝລ່າເມືອງຂຶ້ນຝລັ່ງ ແລະ ຈັກກະພັດອາເມລິກາ<br>> ອາຄານເກົ່າແບບອານານິຄົມ<br>> ວັດຖຸບູຮານ |

ໃຈຄວາມໃນການນຳສະເໜີຂໍ້ມູນສະເພາະ (Specific interpretive theme) ແມ່ນໄດ້ກຳນົດສຳລັບແຕ່ລະສະຖານທີ່ທ່ອງທ່ຽວ ໃນບົດທີ 10: ແຜນນຳສະເໜີຂໍ້ມູນ, ເພື່ອເປັນທິດທາງໃຫ້ແກ່ການສ້າງເລື່ອງລາວ (Story) ຫລື ເນື້ອໃນໃນການນຳສະເໜີທີ່ໜ້າສົນໃຈສຳລັບນັກທ່ອງທ່ຽວ.

[38] Interpretive Master Planning, Volume One: Strategies for the New Millennium, Page 63, John A Veverka, 2018

## 8) ແນວທາງການນໍາສະເໜີຂໍ້ມູນ (Conceptual Approach)

| ສະຖານທີ່ | ແນວທາງການນໍາສະເໜີ |
|---|---|
| ສະຖານທີ່ທ່ອງທ່ຽວ (Tourism sites) | ○ ສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄໍາ, ແກ້ວອຸດົມ ແລະ ໂພນໂຮງ ແມ່ນໄດ້ກໍານົດໄວ້ໃນບົດທີ 6. ແນວທາງການນໍາສະເໜີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ ແມ່ນມີອົງປະກອບດັ່ງນີ້:<br>○ ປ້າຍຊີ້ບອກຕາມເສັ້ນທາງ, ທັງຕາມທາງຫລວງ ແລະ ໃນຕົວເມືອງ<br>○ ປ້າຍປະຫວັດແຫລ່ງທ່ອງທ່ຽວ: ນໍາສະເໜີເລື່ອງລາວ (Story) ທີ່ໜ້າສົນໃຈ ແລະ ກໍານົດໃຈຄວາມໃນການນໍາສະເໜີ (Theme) ທີ່ຊັດເຈນ, ຕັ້ງຢູ່ສະຖານທີ່ໆນັກທ່ອງທ່ຽວມາເປັນກຸ່ມສາມາດຢືນອ່ານໄດ້ໂດຍບໍ່ກີດຂວາງການສັນຈອນ. ການອອກແບບຈະຕ້ອງສອດຄ່ອງກັບສັນຍາລັກທີ່ເປັນເອກະລັກ (Brand) ຂອງການທ່ອງທ່ຽວລາວ.<br>○ ປ້າຍແຜນທີ່ສະເພາະ: ໃຊ້ສໍາລັບສະຖານທີ່ໆມີເນື້ອໃນທີ່ກວ້າງຂວາງ ແລະ ມີຫລາຍສິ່ງໃຫ້ເບິ່ງຊົມເຊັ່ນ: ແຫລ່ງທ່ອງທ່ຽວໜ້າອ່າງນໍ້າງື່ມ.<br>○ ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ: ຊີ້ບອກເສັ້ນທາງ ແລະ ສິ່ງອໍານວຍຄວາມສະດວກພາຍໃນສະຖານທີ່ທ່ອງທ່ຽວ.<br>○ ສື່ດີຈີຕອນ: ແຜນທີ່ອອນລາຍ, ເວັບໄຊ ແລະ ແອບມືຖືທ່ອງທ່ຽວ<br>○ ສື່ສິ່ງພິມ: ຜະລິດແຜ່ນພັບ ແລະ ແຜນທີ່ທ່ອງທ່ຽວ<br>○ ການນໍາທ່ຽວ: ພະນັກງານນໍາທ່ຽວ ແລະ ເຄື່ອງອະທິບາຍສຽງ (Audio Guide) ທີ່ນັກທ່ອງທ່ຽວສາມາດຮັບຟັງການນໍາສະເໜີຂໍ້ມູນດ້ວຍຕົນເອງຜ່ານມືຖື. |
| ບ້ານ / ເກາະດອນ (Villages / Islands) | ○ ບ້ານ ແລະ ເກາະດອນແມ່ນມີປະຫວັດຄວາມເປັນມາ, ເລື່ອງລາວ, ວັດທະນະທໍາ ແລະ ຮີດຄອງປະເພນີທີ່ມີຄຸນຄ່າ ແລະ ໜ້າສົນໃຈໃນການນໍາສະເໜີໃຫ້ແກ່ນັກທ່ອງທ່ຽວ. ແຕ່ການນໍາສະເໜີດັ່ງກ່າວ ຈະຕ້ອງສອດຄ່ອງກັບການນໍາສະເໜີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ, ເພື່ອເຮັດໃຫ້ນັກທ່ອງທ່ຽວສາມາດເຊື່ອມໂຍງເລື່ອງລາວ ແລະ ປະສົບການທ່ອງທ່ຽວຂອງເຂົາເຈົ້າ.<br>○ ບ້ານທີ່ໄດ້ກໍານົດຢູ່ໃນແຜນຍຸດທະສາດການນໍາສະເໜີຂໍ້ມູນສະບັບນີ້ ແມ່ນປະກອບມີ: ບ້ານເກີນ ແລະ ບ້ານຫລັ່ງຊັນເມືອງທຸລະຄົມ ແລະ ບ້ານນາບອນເມືອງໂພນໂຮງ.<br>○ ອົງປະກອບຂອງການນໍາສະເໜີຂໍ້ມູນຢູ່ບ້ານແມ່ນປະກອບມີ: ປ້າຍຊື່ບ້ານ, ປ້າຍປະຫວັດແຫລ່ງທ່ອງທ່ຽວທີ່ອະທິບາຍກ່ຽວກັບປະຫວັດຄວາມເປັນມາຂອງບ້ານ, ວິຖີຊີວິດຊອງປະຊາຊົນ, ຊົນເຜົ່າ, ການທໍາການຜະລິດກະສິກໍາ ແລະ ຫັດຖະກໍາ. |

| | |
|---|---|
| ເສັ້ນທາງທ່ອງທ່ຽວ (Routes) | ○ ເສັ້ນທາງທ່ອງທ່ຽວ (Route) ແມ່ນເສັ້ນທາງທຽວຂອງພາຫະນະ ແລະ ທາງຍ່າງເຂົ້າເຖິງສະຖານທີ່ທ່ອງທ່ຽວພາຍໃນແຂວງວຽງຈັນຢູ່ເມືອງທຸລະຄົມ, ວຽງຄໍາ, ແກ້ວອຸດົມ ແລະ ໂພນໂຮງ.<br>○ ສິ່ງສໍາຄັນແມ່ນປ້າຍຊີ້ບອກເສັ້ນທາງ ໂດຍຈໍາແນກໃຫ້ເຫັນຄວາມແຕກຕ່າງຂອງແຕ່ລະໃຈຄວາມໃນການນໍາສະເຫນີ (Theme) ເພື່ອເຮັດໃຫ້ນັກທ່ອງທ່ຽວສາມາດເດີນທາງຕາມເສັ້ນທາງທີ່ເຂົາເຈົ້າສົນໃຈ ແລະ ສາມາດເຊື່ອມໂຍງບັນດາເລື່ອງລາວ ແລະ ປະສົບການຈາກແຕ່ລະສະຖານທີ່ທ່ອງທ່ຽວເຂົ້າກັນເປັນເລື່ອງລາວອັນດຽວກັນ.<br>○ ລາຍລະອຽດຂອງປ້າຍຊີ້ບອກຕາມເສັ້ນທາງ ແມ່ນໄດ້ອະທິບາຍໄວ້ໃນບົດທີ 10. |
| ປະຕູສູ່ຈຸດຫມາຍປາຍທາງການທ່ອງທ່ຽວ (Gateways into the destination) | ○ ປະຕູສູ່ຈຸດຫມາຍປາຍທາງການທ່ອງທ່ຽວ (Gateway) ແມ່ນທາງເຂົ້າສູ່ແຂວງວຽງຈັນເຊັ່ນ: ສະຫນາມບິນ, ຄິວລົດໂດຍສານ ແລະ ທ່າເຮືອ. ສູນຂໍ້ມູນຂ່າວສານການທ່ອງທ່ຽວກໍ່ຖືເປັນ Gateway ອີກບ່ອນຫນຶ່ງ, ເພາະບາງຄັ້ງກໍ່ເປັນສະຖານທີ່ທໍາອິດທີ່ນັກທ່ອງທ່ຽວສາມາດຊອກຫາຂໍ້ມູນຂ່າວສານການທ່ອງທ່ຽວ.<br>○ ສິ່ງທີ່ຄວນນໍາສະເຫນີຢູ່ Gateways ເຫລົ່ານີ້ແມ່ນຂໍ້ມູນການທ່ອງທ່ຽວທີ່ມີລັກສະນະພາບລວມ, ແຕ່ບໍ່ໄດ້ລົງເລິກລາຍລະອຽດສະຖານທີ່ໃດຫນຶ່ງ ເນື່ອງຈາກເປັນບ່ອນທີ່ນັກທ່ອງທ່ຽວມີເວລາຈໍາກັດ. ປະເພດຂໍ້ມູນແມ່ນປະກອບມີສະຖານທີ່ທ່ອງທ່ຽວທີ່ໂດດເດັ່ນຂອງແຂວງວຽງຈັນ ທີ່ນໍາສະເຫນີໃນຮູບແບບເສັ້ນທາງ ຫລື ວົງຈອນການທ່ອງທ່ຽວ ອີງຕາມໃຈຄວາມໃນການນໍາສະເຫນີຂໍ້ມູນ (Theme) ທີ່ໄດ້ກໍານົດໄວ້. |

## 9) ວິທີການນຳສະເຫນີຂໍ້ມູນ (Interpretive Design Approach)

### 9.1) ເງື່ອນໄຂໃນການອອກແບບ (Design Criteria)

**ພາສາ:** ການນຳສະເຫນີຂໍ້ມູນໂດຍສະເພາະໃນຮູບແບບປ້າຍ ແມ່ນຈະຕ້ອງມີທັງພາສາລາວ ແລະ ພາສາອັງກິດ, ແຕ່ຖືເອົາພາສາລາວເປັນຫລັກ. ກົດຫມາຍວ່າດ້ວຍປ້າຍໄດ້ລະບຸໄວ້ວ່າ: "ປ້າຍທີ່ຂຽນຫລືພິມພາສາລາວ ແລະ ຕ່າງປະເທດແມ່ນໃຫ້ໃສ່ພາສາລາວຢູ່ເທິງ, ພາສາຕ່າງປະເທດຢູ່ລຸ່ມຫລືພາສາລາວຢູ່ເບື້ອງຂວາ ແລະ ພາສາຕ່າງປະເທດຢູ່ເບື້ອງຊ້າຍຂອງປ້າຍ. ຂະຫນາດຕົວຫນັງສືຕ່າງປະເທດບໍ່ໃຫ້ໃຫຍ່ເກີນສອງສ່ວນສາມຂອງຕົວຫນັງສືລາວ"[39]. ສຳລັບພາສາຕ່າງປະເທດອື່ນໆແມ່ນຈະນຳໃຊ້ເຂົ້າໃນສື່ດີຈິຕອນ (Digital media) ແລະ ສື່ສິ່ງພິມ.

**ສີພື້ນ ແລະ ສີຕົວຫນັງສືຂອງປ້າຍ:** ສີພື້ນຂອງປ້າຍຕ້ອງເປັນສີນ້ຳຕານ (ສີເຄືອບເງົາກາແລນ - CORAL RED G163), ສ່ວນຕົວຫນັງສືທັງພາສາລາວ ແລະ ພາສາອັງກິດແມ່ນຕ້ອງເປັນສີຂາວ[40].

**ວັດສະດຸຂອງປ້າຍ:** ທົນທານຕໍ່ສະພາບອາກາດ ແລະ ການກັດກິນຂອງແມງໄມ້. ຖ້ານຳໃຊ້ເສົາໄມ້ສຳລັບປ້າຍປະຫວັດແຫລ່ງທ່ອງທ່ຽວ, ໃຫ້ຄຳນຶງເຖິງການເທພື້ນດ້ວຍຊີມັງຢູ່ພື້ນເສົາ ຫລື ສ້າງຖານດ້ວຍເຫລັກ ເພື່ອປ້ອງກັນການເປ່ເພຈາກສະພາບແວດລ້ອມ ແລະ ແມງໄມ້.

**ຮູບພາບ:** ຕ້ອງສອດຄ່ອງກັບເນື້ອໃນ ແລະ ມີຄວາມລະອຽດສູງ. ກໍລະນີນຳໃຊ້ຮູບເກົ່າ ຫລື ຮູບແຕ້ມ, ແມ່ນຈະຕ້ອງລະບຸທີ່ມາຂອງຮູບພາບ.

### 9.2) ສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວ (Brand Identity)

ການອອກແບບຈະຕ້ອງສອດຄ່ອງກັບສັນຍາລັກທີ່ເປັນເອກະລັກ (Brand) ຂອງການທ່ອງທ່ຽວລາວ "Laos Simply Beautiful" ທີ່ແປວ່າ ປະເທດລາວສວຍງາມແທ້ໆ. ສັນຍາລັກ (Logo) ຂອງການທ່ອງທ່ຽວລາວ ຈະຕ້ອງບັນຈຸຢູ່ໃນທຸກປ້າຍຊີ້ບອກເສັ້ນທາງ, ປ້າຍປະຫວັດແຫລ່ງທ່ອງທ່ຽວ, ສື່ສິ່ງພິມ ແລະ ສື່ອອນລາຍ. ນອກຈາກນັ້ນ, ຈະຕ້ອງປັບປຸງປຶ້ມຄູ່ມືແນະນຳການນຳໃຊ້ສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວລາວ (Brand Guideline) ທີ່ມີຢູ່ແລ້ວໃຫ້ເຂົ້າໃຈງ່າຍຂຶ້ນ ເຊິ່ງປະກອບມີການນຳໃຊ້ໂລໂກ້ໃນຫລາກຫລາຍຮູບແບບ (ພື້ນສີຕ່າງກັນ, ສີ ແລະ ຂາວດຳ), ການນຳໃຊ້ຮູບພາບ ແລະ ຄຳສັບທີ່ສະທ້ອນເຖິງຄວາມເປັນເອກະລັກຂອງການທ່ອງທ່ຽວລາວ.

---

[39] ກົດຫມາຍວ່າດ້ວຍປ້າຍ, ຫນ້າທີ 4, ສະພາແຫ່ງຊາດ, 2018

[40] ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ຫນ້າທີ 5, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

## 9.3) ປ້າຍຊີ້ບອກ (Signage / Wayfinding)

ປ້າຍຊີ້ບອກ ຫມາຍເຖິງປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງເພື່ອສະແດງໃຫ້ຮູ້ທິດທາງ ແລະ ໄລຍະທາງຂອງຈຸດຫມາຍປາຍທາງການທ່ອງທ່ຽວ[41]. ມັນຊ່ວຍໃນການຫລຸດຜ່ອນອຸບັດຕິເຫດຕາມເສັ້ນທາງດ້ວຍການຕິດຕັ້ງປ້າຍຊີ້ບອກລ່ວງຫນ້າ (Advance warning sign) ເຮັດໃຫ້ນັກທ່ອງທ່ຽວ ຫລື ຜູ້ຂັບຂີ່ພາຫະນະຫລຸດຜ່ອນຄວາມໄວ ເພື່ອກະກຽມປ່ຽນທິດທາງການສັນຈອນຕາມລູກສອນຂອງປ້າຍ. ນອກຈາກນັ້ນ, ປ້າຍຊີ້ບອກຍັງມີປະໂຫຍດໃນການຊັກນໍາໃຫ້ນັກທ່ອງທ່ຽວເດີນທາງໄປຕາມເສັ້ນທາງ ຫລື ລາຍການທ່ອງທ່ຽວທີ່ກໍານົດໄວ້ໂດຍອີງໃສ່ເລື່ອງລາວ (Story) ແລະ ໃຈຄວາມໃນການນໍາສະເຫນີຂໍ້ມູນ (Theme) ແລະ ຍັງເປັນເຄື່ອງມືໃນການກະຈາຍຄວາມຫນາແຫນ້ນຂອງນັກທ່ອງທ່ຽວ ໄປອີກຈຸດຫມາຍປາຍທາງການທ່ອງທ່ຽວຫນຶ່ງ.

[41] ປື້ມຄູ່ມືແນະນໍາປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນໍາສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, 2019

### 9.3.1) ປ້າຍຊີ້ບອກຕາມທາງຫລວງ

ແມ່ນປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງຕ່າງໆນອກເຂດຕົວເມືອງ ຫລື ເຂດຊຸມຊົນທີ່ມີການໃຊ້ຄວາມໄວສູງໃນການສັນຈອນ

| ລຳດັບ | ປ້າຍຊີ້ບອກ | ຈຸດພິເສດ | ນ້ອຍ | ກາງ | ໃຫຍ່ |
|---|---|---|---|---|---|
| 1 | ປ້າຍແນວຕັ້ງ (On Ground)<br> | ຕິດຕັ້ງຢູ່ຂ້າງທາງ, ມີຄວາມສູງບໍ່ກາຍ 5 m | o ພື້ນທີ່ຕິດຕັ້ງຈຳກັດ<br>o ຄວາມໄວລົດ: ບໍ່ກາຍ 60 Km/h<br>o ຂະໜາດປ້າຍ: 0.6 x 1.2 m<br>o ຂໍ້ຄວາມຫລັກນ້ອຍສູງ: 15 cm<br>o ຂໍ້ຄວາມສຳຮອງນ້ອຍສຸດ: 10 cm<br>o ຕົວເລກ ແລະ ລູກສອນບອກທິດທາງນ້ອຍສຸດ: 10 cm | o ມີພື້ນທີ່ໃນການຕິດຕັ້ງພໍສົມຄວນ<br>o ຄວາມໄວລົດ: 50 - 70 Km/h<br>o ຂະໜາດປ້າຍ: 0.8 x 2 m<br>o ຂໍ້ຄວາມຫລັກນ້ອຍສູງ: 20 cm<br>o ຂໍ້ຄວາມສຳຮອງນ້ອຍສຸດ: 15 cm<br>o ຕົວເລກ ແລະ ລູກສອນບອກທິດທາງນ້ອຍສຸດ: 15 cm | o ມີພື້ນທີ່ໃນການຕິດຕັ້ງຫລາຍ<br>o ຄວາມໄວລົດ: ກາຍ 70 Km/h<br>o ຂະໜາດປ້າຍ: 1.2 x 2.5 m<br>o ຂໍ້ຄວາມຫລັກນ້ອຍສູງ: 20 cm<br>o ຂໍ້ຄວາມສຳຮອງນ້ອຍສຸດ: 15 cm<br>o ຕົວເລກ ແລະ ລູກສອນບອກທິດທາງນ້ອຍສຸດ: 15 cm |
| 2 | ປ້າຍແນວແຂວນ (Overhang)<br> | ສາມາດແນມເຫັນໄດ້ໃນໄລຍະໄກກວ່າປ້າຍແນວຕັ້ງ | o ຂະໜາດປ້າຍ: 1.2 x 0.6 m<br>o ຕົວໜັງສື: ນ້ອຍສຸດ 20 cm | o ບໍ່ໄດ້ກຳນົດ | o ຂະໜາດປ້າຍ: 2.5 x 2 m<br>o ຕົວໜັງສື: ນ້ອຍສຸດ 20 cm |
| 3 | ປ້າຍແນວຂ້າມທາງ (Gantry)<br> | ສາມາດແນມເຫັນໄດ້ໃນໄລຍະໄກ, ສາມາດນຳໃຊ້ຮູບພາບປະກອບ | o ຂະໜາດປ້າຍ: 8 x 1.5 m | o ບໍ່ໄດ້ກຳນົດ | o ຂະໜາດປ້າຍ: 25 x 3 m |

### 9.3.2) ປ້າຍຊີ້ບອກແຫລ່ງທ່ອງທ່ຽວໃນຕົວເມືອງ



ແມ່ນປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງຍ່າງ ແລະ ທາງແຍກໃນຕົວເມືອງ ເພື່ອຊີ້ບອກສະຖານທີ່ ແລະ ຊື່ຖະຫນົນຕ່າງໆ. ການສັນຈອນພາຍໃນຕົວເມືອງແມ່ນມີຄວາມໄວຈຳກັດ, ສະນັ້ນ ປ້າຍຊີ້ບອກຕ່າງໆຈຶ່ງບໍ່ຈຳເປັນຕ້ອງມີຂະຫນາດໃຫຍ່ເພື່ອໃຫ້ເຫັນໄດ້ໄກ ແຕ່ຈະເນັ້ນຄວາມສູງທີ່ພໍດີ, ເຫມາະກັບສາຍຕາ ແລະຄວາມປອດໄພຂອງຜູ້ສັນຈອນໄປມາ. ຄວາມສູງຈາກພື້ນຢ່າງຫນ້ອຍ 2 m ເພື່ອບໍ່ໃຫ້ບົດບັງສາຍຕາ ແລະ ກີດຂວາງການສັນຈອນ. ຂະ ຫນາດຂອງປ້າຍ: ນ້ອຍສຸດ 50 x 15 cm, ໃຫຍ່ສຸດ 70 x 40 cm, ຂະຫນາດຕົວຫນັງສືນ້ອຍສຸດ 5 cm.

### 9.3.3) ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ




ແມ່ນປ້າຍທີ່ແນະນຳສະຖານທີ່ຕ່າງໆພາຍໃນແຫລ່ງທ່ອງທ່ຽວ ເຊັ່ນ: ຫ້ອງນ້ຳສາທາລະນະ, ບ່ອນຫລິ້ນນ້ຳ, ບ່ອນປ່ຽນເຄື່ອງ, ຮ້ານອາຫານ, ສາລາພັກຜ່ອນ ແລະ ອື່ນໆ ເພື່ອແນະນຳທິດທາງໃນການໄປເຖິງຈຸດຕ່າງໆເຫລົ່ານັ້ນ. ໂດຍທົ່ວໄປປ້າຍຊີ້ບອກຄວນຈະຕິດຕັ້ງຢູ່ບໍລິເວນທາງແຍກ ຫລື ຈຸດເສັ້ນທາງທີ່ຕ້ອງຜ່ານ. ຄວາມສູງຈາກພື້ນຢ່າງຫນ້ອຍ 1 m ເພື່ອໃຫ້ຢູ່ໃນລະດັບສາຍຕາ, ຄວນນຳໃຊ້ສັນຍາລັກປະກອບກັບຕົວຫນັງສື.

ລາຍລະອຽດຂອງຈຸດຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງຂອງແຂວງວຽງຈັນ ແມ່ນໄດ້ກຳນົດໃນບົດທີ 10 ຂໍ້ທີ 10.2: ປ້າຍຊີ້ບອກຕາມເສັ້ນທາງ.

ທີ່ມາຂອງລາຍລະອຽດປ້າຍຊີ້ບອກທັງສາມປະເພດ: ປື້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019.

## 9.4) ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board)

ປ້າຍປະຫວັດແຫລ່ງທ່ອງທ່ຽວ ຫມາຍເຖິງປ້າຍທີ່ສະແດງຂໍ້ມູນກ່ຽວກັບປະຫວັດຄວາມເປັນມາ ແລະ ເລື່ອງລາວທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວ. ເນື້ອໃນຂອງປ້າຍແມ່ນປະກອບມີ: ຮູບພາບ, ຕົວຫນັງສື ແລະ ແຜນທີ່ສະເພາະຂອງສະຖານທີ່ທ່ອງທ່ຽວ. ປະຫວັດຄວາມເປັນມາ ແລະ ເລື່ອງລາວ ຈະຕ້ອງມີໃຈຄວາມໃນການນໍາສະເຫນີ (Theme) ທີ່ຊັດເຈນ ເພື່ອດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ ແລະ ເຮັດໃຫ້ສາມາດເຂົ້າໃຈເລື່ອງລາວໄດ້ໃນເວລາທີ່ຈໍາກັດ. ປ້າຍປະຫວັດແຫລ່ງທ່ອງທ່ຽວສາມາດນໍາສະເຫນີດ້ວຍ 2 ຮູບແບບດັ່ງລຸ່ມນີ້:

### 9.4.1. ປ້າຍແຜນທີ່ ແລະ ຂໍ້ມູນ

ປ້າຍແຜນທີ່ ແລະ ຂໍ້ມູນ ແມ່ນປ້າຍທີ່ສະແດງແຜນຜັງໂດຍລວມຂອງສະຖານທີ່ທ່ອງທ່ຽວ ເພື່ອສະແດງໃຫ້ຮູ້ທີ່ຕັ້ງ ແລະ ເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ຍັງສາມາດແນະນໍາເສັ້ນທາງວົງຈອນ ແລະ ຂໍ້ກໍານົດລະບຽບການຂອງສະຖານທີ່ທ່ອງທ່ຽວ.

### 9.4.2. ປ້າຍກະດານຂໍ້ມູນ

ປ້າຍກະດານຂໍ້ມູນ ແມ່ນກະດານທີ່ສະແດງຂໍ້ມູນຕ່າງໆເຊັ່ນ: ປະຫວັດຄວາມເປັນມາ, ລັກສະນະພິເສດ, ຄວາມໂດດເດັ່ນ ແລະ ສິ່ງຕ່າງໆທີ່ຫນ້າສົນໃຈໃນສະຖານທີ່ທ່ອງທ່ຽວ.

### 9.4.3. ການອອກແບບ

**ອັດຕາສ່ວນເນື້ອໃນ ແລະ ຮູບພາບ:** ຖ້າແບ່ງປ້າຍນໍາສະເຫນີຂໍ້ມູນອອກເປັນ 3 ສ່ວນ, ສ່ວນທີ່ຫນຶ່ງຕ້ອງປະກອບມີຮູບພາບ ຫລື ແຜນວາດ (Graphics), ສ່ວນທີ 2 ແມ່ນເນື້ອໃນ (Text) ແລະ ສ່ວນທີ 3 ແມ່ນພື້ນທີ່ຫວ່າງ (Blank space)[42]. ການຂຽນເນື້ອໃນແມ່ນນໍາໃຊ້ຫລັກການ "3–30–3". ຫມາຍຄວາມວ່າເຮົາມີເວລາ 3 ວິນາທີທໍາອິດ ໃນການດຶງຄວາມສົນໃຈ (Hook) ນັກທ່ອງທ່ຽວໃຫ້ອ່ານ, ຖ້າເຂົາສົນໃຈອ່ານ ເຮົາກໍ່ຈະມີເວລາອີກ 30 ວິນາທີ ໃນການອະທິບາຍໃຈຄວາມຂອງເລື່ອງລາວ (Primary themes and story lines) ແລະ ມີເວລາອີກ 3 ນາທີ ຖ້າເຂົາເຈົ້າມີຄວາມສົນໃຈແທ້ໆ[43]. ເນື່ອງຈາກນັກທ່ອງທ່ຽວມີເວລາທີ່ຈໍາກັດ, ເນື້ອໃນຈະຕ້ອງເນັ້ນໃສ່ເລື່ອງລາວ ແລະ ປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ ອີງຕາມໃຈຄວາມໃນການນໍາສະເຫນີ (Theme) ທີ່ສາມາດເຊື່ອມໂຍງກັບສະຖານທີ່ທ່ອງທ່ຽວອື່ນ. ສາມາດບັນຈຸ QR Code ເພື່ອໃຫ້ນັກທ່ອງທ່ຽວນໍາໃຊ້ໂທລະສັບມືຖືສະແກນ ແລະ ອ່ານຂໍ້ມູນເພີ່ມເຕີມໄດ້.

**ຂະຫນາດຂອງຕົວຫນັງສື:** ທຸກຕົວຫນັງສືຢູ່ໃນປ້າຍປະຫວັດແຫລ່ງທ່ອງທ່ຽວ ຈະຕ້ອງສາມາດອ່ານໄດ້ຈາກໄລຍະຫ່າງ 3 m ຫລື ໃກ້ກວ່ານັ້ນ, ບໍ່ຄວນມີຫລາຍກວ່າ 4 ຂະຫນາດຢູ່ໃນປ້າຍດຽວ ເພື່ອບໍ່ໃຫ້ຜູ້ອ່ານສັບສົນ. ຂະຫນາດໂຕຫນັງສືຕ່າງກັນແມ່ນສາມາດນໍາໃຊ້ກັບໂຕຫນັງສືດັ່ງນີ້: ຫົວຂໍ້ໃຫຍ່, ຫົວຂໍ້ນ້ອຍ, ເນື້ອໃນ ແລະ ຄໍາບັນຍາຍຮູບພາບ[44].

[42] Interpretive Media Design Guidelines, Center for Design and Interpretation, Colorado, USA
[43] Interpretive Media Design Guidelines, Center for Design and Interpretation, Colorado, USA
[44] Outdoor Interpretive Signage, Nova Scotia, Canada, Page 31

**ຈຳນວນຕົວໜັງສື:** ບໍ່ທັນມີການກຳນົດກ່ຽວກັບຈຳນວນຕົວໜັງສືທີ່ຄວນບັນຈຸຢູ່ໃນປ້າຍປະຫວັດແຫລ່ງທ່ອງທ່ຽວຈາກອົງການໃດໆ, ນັບທັງອົງການທ່ອງທ່ຽວໂລກ. ເຖິງຢ່າງໃດກໍ່ຕາມ, ຫລາຍພາກສ່ວນກໍ່ມີຄຳແນະນຳໃນລວງດຽວກັນວ່າ ບໍ່ຄວນບັນຈຸຕົວໜັງສືຈຳນວນຫລາຍເກີນໄປ ເນື່ອງຈາກນັກທ່ອງທ່ຽວບໍ່ຄ່ອຍມີເວລາອ່ານ. ອີກຢ່າງໜຶ່ງ, ຄວນນຳໃຊ້ສື່ອື່ນໆມາປະກອບທີ່ເຮັດໃຫ້ນັກທ່ອງທ່ຽວສາມາດສຳນຶກພາບໄດ້ໃນເວລາທີ່ຈຳກັດເຊັ່ນ ຮູບພາບ, ຮູບແຕ້ມ, ແຜນວາດ ແລະ ອື່ນໆ. ບໍລິສັດອອກແບບການນຳສະເຫນີຂໍ້ມູນຢູ່ປະເທດອົດສະຕາລີ (The Interpretive Design Company[45]) ໄດ້ໃຫ້ຄຳແນະນຳກ່ຽວກັບ ຈຳນວນຕົວໜັງສືໃນປ້າຍປະຫວັດແຫລ່ງທ່ອງທ່ຽວດັ່ງນີ້:

- ປະມານ 150 ຄຳ ສຳລັບປ້າຍຂະໜາດໃຫຍ່ກວ່າ 0.5 $m^2$
- ປະມານ 250 ຄຳ ສຳລັບປ້າຍຂະໜາດໃຫຍ່ກວ່າ 1 $m^2$
- ປະມານ 450 ຄຳ ສຳລັບປ້າຍຂະໜາດໃຫຍ່ກວ່າ 2 $m^2$

**ທີ່ຕັ້ງ:** ຕັ້ງຢູ່ບ່ອນທີ່ບໍ່ກີດຂວາງທາງຍ່າງ, ໃນບໍລິເວນກວ້າງຂວາງ ເພື່ອເຮັດໃຫ້ນັກທ່ອງທ່ຽວທີ່ມາເປັນກຸ່ມຢືນອ່ານ ຫລື ຟັງການບັນຍາຍຂອງພະນັກງານນຳທ່ຽວ, ເປັນຈຸດທີ່ຮົ່ມດີ ແລະ ບໍ່ບົດບັງທັດສະນີຍະພາບ.

## 9.5) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ

ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ ຫມາຍເຖິງປ້າຍທີ່ອອກແບບມາເພື່ອດຶງດູດຜູ້ຄົນເພື່ອໃຫ້ມີຄວາມສົນໃຈໃນແຫລ່ງທ່ອງທ່ຽວໃດໜຶ່ງ ຫລື ຫລາຍບ່ອນໃນປ້າຍດຽວ, ໂດຍອາດຈະມີການສະແດງຮູບພາບທິວທັດຂອງສະຖານທີ່ ຫລື ກິດຈະກຳຕ່າງໆໃນສະຖານທີ່ນັ້ນ ພ້ອມກັບຄຳບັນຍາຍຕ່າງໆເພື່ອສ້າງຄວາມສົນໃຈ[46]. ປ້າຍໂຄສະນາສະຖານທີ່ທ່ອງທ່ຽວປະກອບມີ 2 ປະເພດຄື: ປ້າຍໂຄສະນາສະຖານທີ່ທ່ອງທ່ຽວໃນຕົວເມືອງ ແລະ ປ້າຍໂຄສະນາສະຖານທີ່ທ່ອງທ່ຽວຕາມທາງຫລວງ. ຄວາມແຕກຕ່າງກັບປ້າຍປະຫວັດແຫລ່ງທ່ອງທ່ຽວແມ່ນ ປ້າຍໂຄສະນາເນັ້ນຮູບພາບຂະໜາດໃຫຍ່, ໃນຂະນະທີ່ປ້າຍປະຫວັດແຫລ່ງທ່ອງທ່ຽວແມ່ນເນັ້ນໜັກການອະທິບາຍຂໍ້ມູນທີ່ເລິກເຊິ່ງ. ປ້າຍໂຄສະນາປະກອບມີຫລາຍຮູບແບບຄື: ໂປສເຕີ້ (Poster), ແບນເນີ້ (Banner), ບິວບອດ (Billboard) ແລະ ແພໂນ (Panel).

## 9.6) ສື່ສິ່ງພິມ (Printed Materials)

ສື່ສິ່ງພິມແມ່ນປະກອບມີ ແຜນທີ່, ແຜ່ນພັບ ແລະ ປຶ້ມນຳທ່ຽວ. ເຫມາະສຳລັບກຸ່ມນັກທ່ອງທ່ຽວທີ່ຍັງມີຄວາມຫຍຸ້ງຍາກໃນການເຂົ້າເຖິງເຕັກໂນໂລຊີ, ແຕ່ບໍ່ຄວນຜະລິດຫລາຍເນື່ອງຈາກມີຕົ້ນທຶນສູງ, ການປັບປຸງເນື້ອໃນກໍ່ໃຊ້ເວລາ ແລະ ຫຍຸ້ງຍາກໃນການພິກພາ.

[45] https://interpretivedesign.com.au/blog/signage-content-tips-information
[46] ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ຫນ້າທີ 3, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019

## 9.7) ການນຳທ່ຽວ (Tour Guiding)

ເລື່ອງລາວ (Story) ແລະ ໃຈຄວາມໃນການນຳສະເຫນີ (Theme) ທີ່ໄດ້ກຳນົດຢູ່ໃນແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວສະບັບນີ້, ຈະຕ້ອງຖືກບັນຈຸເຂົ້າໃນຫລັກສູດ ຫລື ເອກະສານຝຶກອົບຮົມພະນັກງານນຳທ່ຽວທັງໃນລະດັບຊາດ, ລະດັບແຂວງ, ພະນັກງານນຳທ່ຽວມໍລະດົກ, ພື້ນທີ່ ແລະ ທ້ອງຖິ່ນ ເພື່ອເຮັດໃຫ້ການນຳສະເຫນີຂໍ້ມູນໃນຫລາກຫລາຍຊ່ອງທາງມີຄວາມເປັນເອກະພາບກັນ. ນອກຈາກນັ້ນ, ບັນດາຫລັກການໃນການນຳສະເຫນີຂໍ້ມູນທີ່ໄດ້ກຳນົດໃນບົດທີ 4 ຍັງມີປະໂຫຍດສຳລັບພະນັກງານນຳທ່ຽວເຊັ່ນ: ການກະຕຸ້ນຄວາມຢາກຮູ້ຢາກເຫັນຂອງນັກທ່ອງທ່ຽວ ໃນການຊອກຫາຄຳຕອບຂອງເລື່ອງລາວ ແທນການອະທິບາຍຂໍ້ມູນແຕ່ພຽງຝ່າຍດຽວ.

## 9.8) ສື່ດິຈິຕອນ (Digital Media)

**ແຜນທີ່ອອນລາຍ Google Maps:** ນັກທ່ອງທ່ຽວສາມາດເຂົ້າເຖິງຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວເຊັ່ນ: ທີ່ຕັ້ງ, ຮູບພາບ, ຄຳຄິດເຫັນຂອງນັກທ່ອງທ່ຽວ, ວັນເວລາເປີດປິດ, ເບີໂທລະສັບ, ເວັບໄຊ ແລະ ອື່ນໆ. ແຜນທີ່ນີ້ສາມາດເບິ່ງໄດ້ທັງໃນຮູບແບບເວັບໄຊ ແລະ ແອບມືຖື. ຄວນນຳໃຊ້ຄຽງຄູ່ກັນກັບປ້າຍຊີ້ບອກຕາມເສັ້ນທາງ, ເພື່ອຫລຸດຜ່ອນຈຳນວນການຕິດຕັ້ງປ້າຍຊີ້ບອກຢູ່ຫລາຍບ່ອນ. ພະແນກ ຖວທ ແຂວງສາມາດສະແດງຄວາມເປັນເຈົ້າຂອງ (Claim this businesses) ບັນດາສະຖານທີ່ທ່ອງທ່ຽວທີ່ຄຸ້ມຄອງ ແລະ ມີຢູ່ໃນ Google Maps ເພື່ອໃຫ້ສາມາດປັບປຸງຂໍ້ມູນໄດ້ຫລາກຫລາຍ ແລະ ມີຄວາມຄົບຖ້ວນ. ເນື່ອງຈາກນັກທ່ອງທ່ຽວຈີນບໍ່ສາມາດນຳໃຊ້ແຜນທີ່ Google Maps ໄດ້, ຈຸດຫມາຍປາຍທາງການທ່ອງທ່ຽວຈຳເປັນຕ້ອງໄດ້ສຶກສາ ແລະ ນຳໃຊ້ Baidu Maps ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຂໍ້ມູນທ່ອງທ່ຽວໃນໂປຣແກຣມດັ່ງກ່າວ.



**TripAdvisor:** ເປັນອີກສື່ສັງຄົມອອນລາຍທີ່ໄດ້ຮັບຄວາມນິຍົມໃນກຸ່ມນັກທ່ອງທ່ຽວທີ່ມາແບບອິດສະຫລະ. ຂໍ້ມູນແມ່ນປະກອບມີ ລາຍການສະຖານທີ່ທ່ອງທ່ຽວ, ຮູບພາບ, ທີ່ຕັ້ງ, ແຜນທີ່, ເວລາເປີດປິດ, ແລະ ຄຳຄິດເຫັນຂອງບັນດານັກທ່ອງທ່ຽວ. ເຊັ່ນດຽວກັບ Google Maps, ພະແນກ ຖວທ ແຂວງສາມາດສະແດງຄວາມເປັນເຈົ້າຂອງບັນດາສະຖານທີ່ທ່ອງທ່ຽວທີ່ບໍ່ແມ່ນຂອງພາກທຸລະກິດ ເພື່ອປັບປຸງຂໍ້ມູນ ແລະ ສາມາດຕິດຕາມສະຖິຕິ ແລະ ທ່າອ່ຽງການຢ້ຽມຢາມຂອງບັນດາສະຖານທີ່ທ່ອງທ່ຽວ.




**ເວັບໄຊ ແລະ ແອບມືຖືທ່ອງທ່ຽວ (Website & Mobile Application):** ນຳໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວລາວ[47] ເພື່ອນຳສະເຫນີຂໍ້ມູນໃຫ້ສອດຄ່ອງກັບການນຳສະເຫນີໃນຮູບແບບປ້າຍປະຫວັດແຫລ່ງທ່ອງທ່ຽວຢູ່ສະຖານທີ່ທ່ອງທ່ຽວ ແລະ ສື່ສັງຄົມອອນລາຍອື່ນໆ. ນອກຈາກນັ້ນ, ເວັບໄຊຍັງສາມາດເປັນບ່ອນນຳສະເຫນີຂໍ້ມູນລະອຽດໃນກໍລະນີທີ່ນັກທ່ອງທ່ຽວໃຊ້ມືຖືສະແກນລະຫັດ QR Code ຢູ່ປ້າຍປະຫວັດແຫລ່ງທ່ອງທ່ຽວ.




**ເຄື່ອງອະທິບາຍສຽງ (Audio guide):** ເຫມາະສຳລັບນັກທ່ອງທ່ຽວທີ່ມັກໃນການຟັງຫລາຍກວ່າການອ່ານຂໍ້ມູນ, ສາມາດນຳສະເຫນີໃນຫລາກຫລາຍພາສາ. ນັກທ່ອງທ່ຽວສາມາດນຳໃຊ້ມືຖືເພື່ອສະແກນລະຫັດ QR Code ຢູ່ປ້າຍປະຫວັດແຫລ່ງທ່ອງທ່ຽວ ເພື່ອຮັບຟັງການບັນຍາຍສຽງ.

[47] https://www.tourismlaos.org

# 10)ແຜນນຳສະເໜີຂໍ້ມູນ (Content Delivery Plan)

## 10.1) ສະຖານທີ່ທ່ອງທ່ຽວ

### 10.1.1) ເມືອງຫຼວງພະບາງ ເມືອງທຸລະຄົມ

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ (Interpretive Theme) | ວິທີການນຳສະເໜີ (Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 1 | ໂຮງງານຜະລິດເກືອບ້ານບໍ່ກາເພັດ<br> | Main theme<br>○ ການຜະລິດເກືອເມືອງທຸລະຄົມມີວິທີການຜະລິດແບບດັ່ງເດີມ ແລະ ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວໂຮງງານຜະລິດເກືອບ້ານບໍ່ກາເພັດ, ຮູບແບບປ້າຍແຜນທີ່ ແລະ ຂໍ້ມູນ, ປະເພດແນວຕັ້ງ, ຂະໜາດໃຫຍ່. ແຜນທີ່ສະແດງເຖິງຂອດການຜະລິດ. ປ້າຍຂໍ້ມູນຢູ່ແຕ່ລະຂັ້ນຕອນການຜະລິດເກືອ, ປະເພດແນວຕັ້ງ, ຂະໜາດກາງ.<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |
| 2 | ອາຄານເກົ່າບ້ານເກີນ<br> | Main theme<br>○ ອາຄານເກົ່າສະໄໝຝລັ່ງມີສະຖາປັດຍະກຳທີ່ສວຍງາມ ແລະ ຕິດພັນກັບເລື່ອງລາວສະໄໝລ່າເມືອງຂຶ້ນຝລັ່ງ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວອາຄານເກົ່າສະໄໝຝລັ່ງ, ປະເພດແນວຕັ້ງ, ຂະໜາດກາງ. ປ້າຍຊື່ສະຖານທີ່ແມ່ນລວມຢູ່ໃນປ້າຍປະຫວັດແຫລ່ງທ່ອງທ່ຽວ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ກາງ |

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ (Interpretive Theme) | ວິທີການນຳສະເໜີ (Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 3 | ເດີ່ນບິນເກົ່າບ້ານເກີນ<br> | <u>Main theme</u><br>○ ເດີ່ນບິນເກົ່າບ້ານເກີນຖືກນຳໃຊ້ສຳລັບເຮືອບິນຂອງຈັກກະພັດອາເມລິກາໄລຍະສົງຄາມຫວຽດນາມ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວເດີ່ນບິນເກົ່າບ້ານເກີນ, ປະເພດແນວຕັ້ງ, ຂະໜາດໃຫຍ່. ນຳໃຊ້ຮູບພາບ ຫລື ແບບຈຳລອງເຮືອບິນໃນສະໄໝກ່ອນ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ຕ່ຳ |
| 4 | ທໍ່ສິລາຈາລຶກວິລະບູລຸດນັກຮົບປະສົມລາວ - ຫວຽດ<br> | <u>Main theme</u><br>○ ຍ້ອນຄວາມສາມັກຄີຂອງກອງກຳລັງສູ້ຮົບປະສົມລາວຫວຽດເຮັດໃຫ້ສາມາດບຸກໂຈມຕີຖານທີ່ຕັ້ງຂອງພວກລ່າເມືອງຂຶ້ນຝລັ່ງ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວທໍ່ສິລາຈາລຶກວິລະບູລຸດນັກຮົບປະສົມລາວຫວຽດ, ປະເພດແນວຕັ້ງ, ຂະໜາດໃຫຍ່. ຕັ້ງຢູ່ໃກ້ກັບຝາຮູບພາບທີ່ສະແດງເຖິງເລື່ອງລາວໃນສະໄໝກ່ອນ<br>○ ປ້າຍຊື່ພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ທໍ່ສິລາຈາລຶກ, ບໍ່ນ້ຳສ້າງ ແລະ ກອງູນ.<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ກາງ |
| 5 | ວັດວຽງພຣະແກ້ວ<br> | <u>Main theme</u><br>○ ວັດວຽງພຣະແກ້ວ ເຄີຍເປັນບ່ອນປະດິດສະຖານຂອງພຣະແກ້ວມໍລະກົດ ແລະ ເປັນທີ່ພັກເຈົ້າໄຊເສດຖາ ແລະ ທະຫານ ໄລຍະຍ້າຍນະຄອນຫລວງຂອງອານາຈັກລ້ານຊ້າງຈາກຫລວງພະບາງໄປນະຄອນຫລວງວຽງຈັນ. | ○ ປ້າຍຊື່ສະຖານທີ່ທ່ອງທ່ຽວ<br>○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັດວຽງພຣະແກ້ວ, ປະເພດແນວຕັ້ງ, ຂະໜາດໃຫຍ່<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ (Interpretive Theme) | ວິທີການນຳສະເໜີ (Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 6 | ວັດພະທາດມາຫລ້າ<br> | <u>Main theme</u><br>○ ວັດພະທາດມາຫລ້າ ເປັນພະທາດສັກສິດ ແລະ ມີປະຫວັດຄວາມເປັນມາຕິດພັນກັບພະທາດຫລວງຢູ່ນະຄອນຫລວງວຽງຈັນ. | ○ ປ້າຍຊື່ສະຖານທີ່ທ່ອງທ່ຽວ<br>○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັດພະທາດມາຫລ້າ, ປະເພດແນວຕັ້ງ, ຂະໜາດໃຫຍ່<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດີຈີຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ກາງ |
| 7 | ວັດຫລີ່ງຊຸ້ນໃຕ້<br> | <u>Main theme</u><br>○ ພະທອງສາມສີ ເປັນພະພຸດທະຮູບສັກສິດ ແລະ ມີຄວາມສຳຄັນຕໍ່ກັບປະຊາຊົນທ້ອງຖິ່ນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັດຫລີ່ງຊຸ້ນໃຕ້, ປະເພດແນວຕັ້ງ, ຂະໜາດໃຫຍ່. ປ້າຍຂໍ້ມູນເຮືອບູຮານ, ປະເພດໂພດຽມ, ຂະໜາດກາງ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດີຈີຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |
| 8 | ວັດຫລີ່ງຊຸ້ນກາງ<br> | <u>Main theme</u><br>○ ວັດຫລີ່ງຊຸ້ນກາງ ມີຮ່ອງຮອຍປະຫວັດສາດ ແລະ ວັດຖຸບູຮານທີ່ສຳຄັນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັດຫລີ່ງຊຸ້ນກາງ, ປະເພດແນວຕັ້ງ, ຂະໜາດໃຫຍ່. ປ້າຍແຜນທີ່ ແລະ ຂໍ້ມູນກ່ຽວກັບເຕົາຫລອມພະພຸດທະຮູບບູຮານ, ປະເພດໂພດຽມ, ຂະໜາດກາງ. ປ້າຍຂໍ້ມູນກ່ຽວກັບວັດຖຸບູຮານພາຍໃນສິມ, ປະເພດໂພດຽມ, ຂະໜາດນ້ອຍ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດີຈີຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |

### 10.1.2) ເມືອງວຽງຄຳ

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ<br>(Interpretive Theme) | ວິທີການນຳສະເໜີ<br>(Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 1 | ວັດປ່າໄຜ່ໜາມເຈົ້າຟ້າງຸ່ມ<br> | <u>Main theme</u><br>○ ວັດປ່າໄຜ່ໜາມເຈົ້າຟ້າງຸ່ມ ເຄີຍເປັນສະຖານທີ່ປະດິດສະຖານຂອງພະບາງ ໃນສະໄໝເຈົ້າຟ້າງຸ່ມເຄື່ອນຍ້າຍອົງພະບາງຈາກກຳປູເຈຍຫາຫລວງພະບາງ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັດປ່າໄຜ່ໜາມເຈົ້າຟ້າງຸ່ມ, ປະເພດແນວຕັ້ງ, ຂະໜາດໃຫຍ່. ປ້າຍຂໍ້ມູນກ່ຽວກັບໃບສີມາ, ປະເພດໂພດຽມ, ຂະໜາດກາງ. ປ້າຍຂໍ້ມູນກ່ຽວກັບພະພຸດທະຮູບເກົ່າແກ່, ປະເພດໂພດຽມ, ຂະໜາດກາງ.<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |

## 10.1.3) ເມືອງແກ້ວອຸດົມ

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ (Interpretive Theme) | ວິທີການນຳສະເໜີ (Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 1 | ສວນເຂື່ອນໄຟຟ້ານ້ຳງື່ມ 1   | Main theme<br>○ ເຂື່ອນໄຟຟ້ານ້ຳງື່ມ 1 ຜະລິດກະແສໄຟຟ້າຈາກພະລັງນ້ຳ, ສ້າງລາຍຮັບເຂົ້າສູ່ປະເທດ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຄົນທ້ອງຖິ່ນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວເຂື່ອນໄຟຟ້ານ້ຳງື່ມ 1, ປະເພດແນວຕັ້ງ, ຂະໜາດໃຫຍ່, ຕັ້ງຢູ່ສວນສາລາປາປາກ, ໜ້າເຂື່ອນໄຟຟ້າ. ປ້າຍຂໍ້ມູນຢູ່ຈຸດໃຫ້ອາຫານປາປາກ, ປະເພດໂພດຽມ, ຂະໜາດນ້ອຍ.<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ.<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ.<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |
| 2 | ອ່າງນ້ຳງື່ມ  | Main theme<br>○ ອ່າງນ້ຳງື່ມມີທິວທັດທີ່ສວຍງາມ, ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ແລະ ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວອ່າງນ້ຳງື່ມ, ປະເພດແນວຕັ້ງ, ຂະໜາດໃຫຍ່<br>○ ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ. ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ ເຊັ່ນ: ທ່າເຮືອ, ສູນຂໍ້ມູນ, ຫ້ອງນ້ຳສາທາລະນະ ແລະ ບ່ອນຈອດລົດ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |
| 3 | ສູນຂໍ້ມູນຂ່າວສານການທ່ອງທ່ຽວ  | Main theme<br>○ ແຂວງວຽງຈັນມີສະຖານທີ່ທ່ອງທ່ຽວທີ່ຫລາກຫລາຍ ທັງທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ. | ○ ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ, ຮູບແບບບິວບອດ (Billboard), ບັນຈຸຮູບພາບຂະໜາດໃຫຍ່ ແລະ ຂໍ້ຄວາມສັ້ນ ເພື່ອດຶງດູດຈິດໃຈນັກທ່ອງທ່ຽວ.<br>○ ປ້າຍປະຫວັດແຫລ່ງທ່ອງທ່ຽວອ່າງນ້ຳງື່ມ, ປະເພດຕິດຝາສູນຂໍ້ມູນ, ຂະໜາດໃຫຍ່. ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ກາງ |

## 10.1.4) ເມືອງໂພນໂຮງ

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ<br>(Interpretive Theme) | ວິທີການນຳສະເໜີ<br>(Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 1 | ສູນຫັດຖະກຳບ້ານນາບອນ<br> | Main theme<br>○ ວິຖີຊີວິດຂອງຄົນທ້ອງຖິ່ນ ມີຄວາມຕິດພັນກັບທຳມະຊາດ ເຮັດໃຫ້ມີສຸຂະພາບທີ່ແຂງແຮງ. | ○ ປ້າຍຊື່ສະຖານທີ່ທ່ອງທ່ຽວ. ປ້າຍປະຫວັດແຫລ່ງທ່ອງທ່ຽວສູນຫັດຖະກຳບ້ານນາບອນ, ປະເພດແນວຕັ້ງ, ຂະໜາດໃຫຍ່. ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ທາງໄປຫມູ່ບ້ານ, ສະຖານທີ່ຜະລິດເຂົ້າປຸ້ນ, ເຮັດນາ, ຈັກສານ, ຫ້ອງນ້ຳ ແລະ ອື່ນໆ. ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |
| 2 | ວັງຊ້າງ<br> | Main theme<br>○ ວັງຊ້າງເຄີຍເປັນທີ່ຢູ່ອາໄສຂອງຊ້າງໃນສະໄຫມບູຮານ ແລະ ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັງຊ້າງ, ປະເພດແນວຕັ້ງ, ຂະໜາດໃຫຍ່<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ກາງ |
| 3 | ວັດພະທາດດອນແກ້ວ<br> | Main theme<br>○ ພະທາດດອນແກ້ວ ແມ່ນບູຮານສະຖານທີ່ເກົ່າແກ່ ແລະ ມີປະຫວັດຄວາມເປັນມາຕິດພັນກັບພະທາດຫລວງຢູ່ນະຄອນຫລວງວຽງຈັນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວວັດພະທາດດອນແກ້ວ, ປະເພດແນວຕັ້ງ, ຂະໜາດໃຫຍ່. ປ້າຍຂໍ້ມູນກ່ຽວກັບບັ້ງໄຟ ແລະ ບໍ່ນຳສ້າງສັກສິດ, ປະເພດໂພດຽມ, ຂະໜາດນ້ອຍ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດິຈິຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ຕ່ຳ |

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ<br>(Interpretive Theme) | ວິທີການນຳສະເໜີ<br>(Interpretive Media & Services) | ບູລິມະສິດ |
|---|---|---|---|---|
| 4 | ສູນຫັດຖະກຳຈັກສານກຸ່ມບ້ານນາເຫລົ່າ<br> | <u>Main theme</u><br>○ ການຕ່ຳຫູກທໍໄໝບ້ານນາເຫລົ່າ ແມ່ນມີເອກະລັກສະເພາະ ແລະ ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວສູນຫັດຖະກຳຈັກສານກຸ່ມບ້ານນາເລົ່າ, ປະເພດແນວຕັ້ງ, ຂະໜາດໃຫຍ່<br>○ ປ້າຍຊື່ແຕ່ລະຂອດການຜະລິດຂອງການຕ່ຳຫູກທໍໄໝ<br>○ ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ສື່ດີຈີຕອນ: ປັບປຸງຂໍ້ມູນໃນແຜນທີ່ອອນລາຍ Google Maps, TripAdvisor, ເວັບໄຊທ່ອງທ່ຽວລາວ<br>○ ສື່ສິ່ງພິມ: ບັນຈຸຂໍ້ມູນເຂົ້າໃນແຜ່ນພັບ (Brochure) ທີ່ສະແດງແຜນທີ່ເສັ້ນທາງ ແລະ ຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວ | ສູງ |

## 10.2) ປ້າຍຊີ້ບອກຕາມເສັ້ນທາງ

ແຜນທີ່ແຂວງວຽງຈັນ




### Thoulakhom

- ໂຮງງານຜະລິດເກືອບ້ານບໍ່ກາເພັດ
- ອາຄານເກົ່າ
- ເດີ່ນບິນເກົ່າ
- ຫໍສີລາຈາລຶກວິລະບູລູດ
- ວັດວຽງພຣະແກ້ວ
- ວັດພະທາດມາຫລ້າ
- ທ່າເຮືອ
- ທ່າເຮືອ
- ວັດຫລິ່ງຊັນກາງ
- ວັດຫລິ່ງຊັນໃຕ້

### Viengkham

- ວັດປ່າໄຜ່ໜາມເຈົ້າຟ້າງຸ່ມ

### Keo Oudom

- ສວນເຂື່ອນໄຟຟ້ານ້ຳງື່ມ
- ຈຸດຊົມວິວ
- ບ່ອນຈອດລົດ
- ຈຸດຊົມວິວ
- ຫ້ອງຂໍ້ມູນຂ່າວສານ
- ທ່າເຮືອ

### Phonhong

- ສູນຫັດຖະກຳບ້ານນາຂອນ
- ວັງຊ້າງ
- ວັດພະທາດດອນແກ້ວ
- ສູນຫັດຖະກຳຈັກສານກຸ່ມບ້ານນາເຫລົ່າ
- ຫັດຖະກຳປ້າຄຳແສນ

ແຜນທີ່ອອນລາຍ: https://bit.ly/2Zc7jen

## 10.2.1) ເມືອງທຸລະຄົມ

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 1 |  | ○ ທີ່ຕັ້ງ: ສາມແຍກທາງເຂົ້າໂຮງງານ ຜະລິດເກືອບ້ານບໍ່ກາເພັດ ຖະໜົນເລກທີ 10<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມ ທາງຫລວງ, ແນວຕັ້ງ, ຂະໜາດ ນ້ອຍ<br>○ ລູກສອນຊີ້ໄປທາງຂວາ<br>< ໂຮງງານຜະລິດເກືອບ້ານບໍ່ກາເພັດ ....... Km<br>○ ລູກສອນຊີ້ໄປທາງຊື່<br>▪ ຫໍສີລາຈາລຶກວິລະບູລຸດນັກຮົບ ປະສົມລາວ - ຫວຽດ ....... Km<br>▪ ອ່າງນ້ຳງື່ມ ....... Km |
| 2 |  | ○ ທີ່ຕັ້ງ: ສາມແຍກທະນາຄານການ ຄ້າ ຖະໜົນເລກທີ 10<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມ ທາງຫລວງ, ແນວຕັ້ງ, ຂະໜາດ ນ້ອຍ<br>○ ລູກສອນຊີ້ໄປທາງຊ້າຍ<br>< ຫໍສີລາຈາລຶກວິລະບູລຸດນັກຮົບ ປະສົມລາວ - ຫວຽດ ....... Km<br>< ວັດພະທາດມາຫລ້າ ....... Km<br>< ວັດຫລິ່ງຊຸ້ນໃຕ້ ....... Km<br>○ ລູກສອນຊີ້ໄປທາງຊື່<br>▪ ວັດວຽງພຣະແກ້ວ ....... Km<br>▪ ອ່າງນ້ຳງື່ມ ....... Km |

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 3 |  | ○ ທີ່ຕັ້ງ: ສາມແຍກທາງເຂົ້າຫໍສິລາຈາລຶກວິລະບູລຸດນັກຮົບປະສົມລາວ - ຫວຽດ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຂວາ<br>< ຫໍສິລາຈາລຶກວິລະບູລຸດນັກຮົບປະສົມລາວ - ຫວຽດ ....... Km<br>○ ລູກສອນຊີ້ໄປທາງຊື່<br>▪ ວັດພະທາດມາຫລ້າ ....... Km<br>▪ ວັດຫລິ່ງຊຸ້ນໃຕ້ ....... Km |
| 4 |  | ○ ທີ່ຕັ້ງ: ສາມແຍກທາງເຂົ້າວັດວຽງພຣະແກ້ວ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຊ້າຍ<br>< ວັດວຽງພຣະແກ້ວ ....... Km<br>○ ລູກສອນຊີ້ໄປທາງຊື່<br>▪ ອ່າງນ້ຳງື່ມ ....... Km |
| 5 |  | ○ ທີ່ຕັ້ງ: ສີ່ແຍກທາງເຂົ້າວັດພະທາດມາຫລ້າ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຂວາ<br>< ວັດພະທາດມາຫລ້າ |

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 6 |  | ○ ທີ່ຕັ້ງ: ຫນ້າວັດພະທາດມາຫລ້າ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະຫນາດນ້ອຍ<br>○ ລູກສອນຊີ້ໄປທາງຊື່<br>▪ ທ່າບັກຂ້າມໄປວັດຫລີ່ງຊັນໃຕ້ |
| 7 |  | ○ ທີ່ຕັ້ງ: ຫນ້າວັດຫລີ່ງຊັນໃຕ້<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະຫນາດນ້ອຍ<br>○ ລູກສອນຊີ້ໄປທາງຊື່<br>▪ ວັດຫລີ່ງຊັນກາງ |
| 8 |  | ○ ທີ່ຕັ້ງ: ຫນ້າວັດຫລີ່ງຊັນກາງ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະຫນາດນ້ອຍ<br>○ ລູກສອນຊີ້ໄປທາງຊື່<br>▪ ສູນທັດຖະກຳບ້ານນາບອນ<br>▪ ນະຄອນຫລວງວຽງຈັນ |

## 10.2.2) ເມືອງໂພນໂຮງ

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 1 |  | o ທີ່ຕັ້ງ: ສາມແຍກຖະໜົນເລກທີ 13 ອອກມາທາງວັດຫລິ່ງຊັນ<br>o ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດກາງ<br>o ລູກສອນຊີ້ໄປທາງຂວາ<br>< ສູນຫັດຖະກຳບ້ານນາບອນ<br>< ວັງຊ້າງ<br>< ອ່າງນ້ຳງື່ມ<br>o ລູກສອນຊີ້ໄປທາງຊ້າຍ<br>< ນະຄອນຫລວງວຽງຈັນ |
| 2 |  | o ທີ່ຕັ້ງ: ໜ້າສູນຫັດຖະກຳບ້ານນາບອນ<br>o ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>o ລູກສອນຊີ້ໄປທາງຂວາ<br>< ສູນຫັດຖະກຳບ້ານນາບອນ<br>o ລູກສອນຊີ້ໄປທາງຊື່<br>▪ ວັງຊ້າງ<br>▪ ອ່າງນ້ຳງື່ມ |
| 3 |  | o ທີ່ຕັ້ງ: ທາງເຂົ້າວັງຊ້າງ<br>o ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>o ລູກສອນຊີ້ໄປທາງຂວາ<br>< ວັງຊ້າງ<br>o ລູກສອນຊີ້ໄປທາງຊື່<br>▪ ສູນຫັດຖະກຳຈັກສານກຸ່ມບ້ານນາເຫລົ່າ<br>▪ ວັດພະທາດດອນແກ້ວ<br>▪ ອ່າງນ້ຳງື່ມ |

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 4 |  | ○ ທີ່ຕັ້ງ: ໜ້າສູນຫັດຖະກຳຈັກສານກຸ່ມບ້ານນາບອນ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຊ້າຍ<br>< ວັດພະທາດດອນແກ້ວ<br>○ ລູກສອນຊີ້ໄປທາງຊື່<br>▪ ສູນຫັດຖະກຳຈັກສານກຸ່ມບ້ານນາບອນ<br>▪ ອ່າງນ້ຳງື່ມ |

## 10.2.3) ເມືອງວຽງຄຳ

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 1 |  | ○ ທີ່ຕັ້ງ: ສົ້ນຂົວຂ້າມນ້ຳງື່ມປາກກະຍຸງ - ເມືອງເກົ່າ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຂ້າມທາງ<br>○ ລູກສອນຊີ້ໄປທາງຊ້າຍ<br>< ວັດປ່າໄຜ່ໜາມເຈົ້າຟ້າງຸ່ມ<br>○ ລູກສອນຊີ້ໄປທາງຊື່<br>▪ ວັດພະທາດດອນແກ້ວ<br>▪ ອ່າງນ້ຳງື່ມ<br>▪ ເມືອງວັງວຽງ |
| 2 |  | ○ ທີ່ຕັ້ງ: ສາມແຍກວັດປ່າໄຜ່ໜາມເຈົ້າຟ້າງຸ່ມ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຊ້າຍ<br>< ວັດປ່າໄຜ່ໜາມເຈົ້າຟ້າງຸ່ມ<br>○ ລູກສອນຊີ້ໄປທາງຊື່<br>▪ ທ່າບັກຂ້າມເມືອງທຸລະຄົມ |

## 10.2.4) ເມືອງແກ້ວອຸດົມ

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 1 |  | ○ ທີ່ຕັ້ງ: ສາມແຍກກ່ອນຂົວຂ້າມນ້ຳງື່ມທ່າລາດ ທາງເລກທີ 10<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະຫນາດນ້ອຍ<br>○ ລູກສອນຊີ້ໄປທາງຊື່<br>▪ ອ່າງນ້ຳງື່ມ<br><br>ຫມາຍເຫດ: ກ່ອນຫນ້າສາມແຍກນີ້ 100 m ຍັງມີອີກສາມແຍກຫນຶ່ງ |
| 2 |  | ○ ທີ່ຕັ້ງ: ສາມແຍກທາງເຂົ້າຫ້ອງການ ແລະ ໂຮງຫມໍເມືອງແກ້ວອຸດົມ ເສັ້ນທາງເລກທີ 10<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະຫນາດນ້ອຍ<br>○ ລູກສອນຊີ້ໄປທາງຊື່<br>▪ ອ່າງນ້ຳງື່ມ |
| 3 |  | ○ ທີ່ຕັ້ງ: ສາມແຍກທາງຂຶ້ນອ່າງນ້ຳງື່ມ ເສັ້ນທາງເລກທີ 10<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະຫນາດກາງ<br>○ ລູກສອນຊີ້ໄປທາງຊື່<br>▪ ອ່າງນ້ຳງື່ມ<br>○ ລູກສອນຊີ້ໄປທາງຂວາ<br>> ນະຄອນຫລວງວຽງຈັນ |

| ລຳດັບ | ຈຸດຕິດຕັ້ງປ້າຍຊີ້ບອກ | ລາຍລະອຽດ |
|---|---|---|
| 4 |  | ○ ທີ່ຕັ້ງ: ສວນເຂື່ອນໄຟຟ້ານໍ້າງື່ມ 1<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຂວາ<br>> ອ່າງນໍ້າງື່ມ |
| 5 |  | ○ ທີ່ຕັ້ງ: ສະຖານທີ່ຈອດລົດ ທາງຂຶ້ນອ່າງນໍ້າງື່ມ (ອະນາຄົດ)<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຂວາ<br>> ສະຖານທີ່ຈອດລົດ<br>○ ລູກສອນຊີ້ໄປທາງຊື່<br>▪ ຈຸດຊົມວິວ (ອະນາຄົດ)<br>▪ ອ່າງນໍ້າງື່ມ<br>▪ ສູນຂໍ້ມູນຂ່າວສານການທ່ອງທ່ຽວ |
| 6 |  | ○ ທີ່ຕັ້ງ: ທາງຂຶ້ນອ່າງນໍ້າງື່ມ<br>○ ປະເພດປ້າຍ: ປ້າຍຊີ້ບອກຕາມທາງຫລວງ, ແນວຕັ້ງ, ຂະໜາດນ້ອຍ<br>○ ລູກສອນຊີ້ໄປທາງຊ້າຍ<br>< ອ່າງນໍ້າງື່ມ<br>< ສູນຂໍ້ມູນຂ່າວສານການທ່ອງທ່ຽວ |

## 11)ແຜນຈັດຕັ້ງປະຕິບັດ (Action Plan)

| ລຳດັບ | ກິດຈະກຳ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|
| I | ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board) | | | | | |
| 1 | ອອກແບບເນື້ອໃນສຳລັບປ້າຍປະຫວັດແຫລ່ງທ່ອງທ່ຽວຂອງສະຖານທີ່ທ່ອງທ່ຽວ ແລະ ສູນຂໍ້ມູນຂ່າວສານການທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ (ເບິ່ງລາຍລະອຽດປະເພດປ້າຍໃນບົດທີ 9, ຂໍ້ທີ 9.4) | | | | | |
| 2 | ຕິດຕັ້ງປ້າຍປະຫວັດແຫລ່ງທ່ອງທ່ຽວຕາມສະຖານທີ່ທ່ອງທ່ຽວ ແລະ ສູນຂໍ້ມູນຂ່າວສານການທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ | | | | | |
| II | ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ (Advertising Board) | | | | | |
| 1 | ອອກແບບເນື້ອໃນປ້າຍໂຄສະນາສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ (ເບິ່ງລາຍລະອຽດປະເພດປ້າຍໃນບົດທີ 9, ຂໍ້ທີ 9.5) | | | | | |
| 2 | ຕິດຕັ້ງປ້າຍໂຄສະນາສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ | | | | | |
| III | ປ້າຍຊີ້ບອກຕາມເສັ້ນທາງ (Directional Signpost) | | | | | |
| 1 | ອອກແບບປ້າຍຊີ້ບອກຕາມເສັ້ນທາງຫລວງ, ໃນຕົວເມືອງ ແລະ ໃນສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ (ລາຍລະອຽດປະເພດປ້າຍໃນຂໍ້ທີ 9.3) | | | | | |
| 2 | ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງຫລວງ, ໃນຕົວເມືອງ ແລະ ໃນສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ | | | | | |

| ລຳດັບ | ກິດຈະກຳ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|
| IV | ສື່ດີຈີຕອນ (Digital Media) | | | | | |
| 1 | ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນໃນຂະແໜງການທ່ອງທ່ຽວ ໃນການປັບປຸງ ແລະ ບໍລິຫານຂໍ້ມູນໃນສື່ດີຈີຕອນ (ນັບທັງເຄື່ອງມືທີ່ນັກທ່ອງທ່ຽວຈີນນຳໃຊ້) | | | | | |
| 2 | ປັບປຸງຂໍ້ມູນຂອງສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ ໃນແຜນທີ່ອອນລາຍ Google Maps | | | | | |
| 3 | ປັບປຸງຂໍ້ມູນຂອງສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ ໃນເວັບໄຊ ແລະ ແອບມືຖືທ່ອງທ່ຽວລາວ | | | | | |
| 4 | ປັບປຸງຂໍ້ມູນຂອງສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ ໃນເວັບໄຊ TripAdvisor | | | | | |
| 5 | ປັບປຸງຂໍ້ມູນຂອງສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ ໃນເວັບໄຊສຳລັບນັກທ່ອງທ່ຽວຈີນເຊັ່ນ: Baidu Maps, Wechat, Mafengwo, Qyer ແລະ Ctrip | | | | | |
| 6 | ສ້າງຄຳບັນຍາຍສຽງ (Audio Guide) ເພື່ອໃຊ້ເຂົ້າໃນການນຳສະເໜີຂໍ້ມູນສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ | | | | | |
| V | ສິ່ງພິມ (Printed Materials) | | | | | |
| 1 | ອອກແບບ ແລະ ຈັດພິມແຜ່ນພັບສຳລັບການນຳສະເໜີຂໍ້ມູນສະຖານທີ່ທ່ອງທ່ຽວຢູ່ເມືອງທຸລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ ໃຫ້ສອດຄ່ອງກັບສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວລາວ | | | | | |

| ລຳດັບ | ກິດຈະກຳ | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|
| 2 | ອອກແບບ ແລະ ຈັດພິມແຜ່ນທີ່ທ່ອງທ່ຽວ ສຳລັບການນຳສະເຫນີຂໍ້ມູນເສັ້ນທາງທ່ອງທ່ຽວຢູ່ ເມືອງຫຼລະຄົມ, ວຽງຄຳ, ແກ້ວອຸດົມ ແລະ ໂພນໂຮງ ໃຫ້ສອດຄ່ອງກັບສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວລາວ | | | | | |
| VI | ການນຳທ່ຽວ (Tour Guiding) | | | | | |
| 1 | ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານນຳທ່ຽວກ່ຽວກັບເລື່ອງລາວ ແລະ ວິທີການນຳສະເຫນີຂໍ້ມູນທີ່ລະບຸໄວ້ໃນແຜນຍຸດທະສາດການນຳສະເຫນີຂໍ້ມູນສະບັບນີ້ | | | | | |
| VII | ການຕິດຕາມ ແລະ ປະເມີນຜົນ (Monitoring and Evaluation) | | | | | |
| 1 | ອອກແບບລະບົບການຕິດຕາມ ແລະ ປະເມີນຜົນການນຳສະເຫນີຂໍ້ມູນໃນຮູບແບບປ້າຍ, ສື່ດິຈິຕອນ, ສື່ສິ່ງພິມ ແລະ ການນຳທ່ຽວ | | | | | |
| 2 | ດຳເນີນການຕິດຕາມ ແລະ ປະເມີນຜົນການນຳສະເຫນີຂໍ້ມູນໃນຮູບແບບປ້າຍ, ສື່ດິຈິຕອນ, ສື່ສິ່ງພິມ ແລະ ການນຳທ່ຽວ | | | | | |
| 3 | ເຜີຍແຜ່ຜົນໄດ້ຮັບຂອງການຕິດຕາມ ແລະ ປະເມີນຜົນເພື່ອປັບປຸງການນຳສະເຫນີຂໍ້ມູນໃນຕໍ່ຫນ້າ | | | | | |

## 12)ການຈັດລຽງບູລິມະສິດ (Prioritization)

ການຈັດຕັ້ງປະຕິບັດແຜນຍຸດທະສາດການນຳສະເໜີຂໍ້ມູນການທ່ອງທ່ຽວແຂວງວຽງຈັນ ແມ່ນປະກອບມີຫລາຍກິດຈະກຳ ແລະ ອາດນຳໃຊ້ງົບປະມານຈຳນວນຫລາຍ. ສະນັ້ນ, ຈຶ່ງຈຳເປັນຕ້ອງມີການຈັດລຽງບູລິມະສິດບັນດາກິດຈະກຳດັ່ງກ່າວ, ເພື່ອເຮັດໃຫ້ສາມາດສຸມໃສ່ສະເພາະກິດຈະກຳທີ່ມີຄວາມສຳຄັນ ຫລື ມີບູລິມະສິດສູງສຸດ. ໃນບົດທີ 10: ແຜນນຳສະເໜີຂໍ້ມູນໄດ້ກຳນົດບູລິມະສິດຂອງແຕ່ລະກິດຈະກຳແຕ່ຕ່ຳຫາສູງ, ເຊິ່ງອີງໃສ່ບັນດາເງື່ອນໄຂດັ່ງລຸ່ມນີ້:

1) ເປັນສະຖານທີ່ທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຢູ່ແລ້ວ ຫລື ມີນັກທ່ອງທ່ຽວໄປຢ້ຽມຊົມຈຳນວນຫລາຍ
2) ສະຖານທີ່ທ່ອງທ່ຽວມີເລື່ອງລາວທີ່ໜ້າສົນໃຈ ສາມາດດຶງດູດນັກທ່ອງທ່ຽວໃນອະນາຄົດ
3) ເປັນສະຖານທີ່ທ່ອງທ່ຽວທີ່ສາມາດສ້າງລາຍຮັບ ຫລື ມີທ່າແຮງສ້າງລາຍຮັບຈາກການທ່ອງທ່ຽວ
4) ເປັນສູນຂໍ້ມູນຂ່າວສານການທ່ອງທ່ຽວທີ່ຕັ້ງຢູ່ຈຸດທີ່ນັກທ່ອງທ່ຽວມີຄວາມສົນໃຈໃຊ້ບໍລິການ
5) ເປັນຈຸດຕິດຕັ້ງປ້າຍຊີ້ບອກໃນເສັ້ນທາງທີ່ສຳຄັນ ແລະ ມີນັກທ່ອງທ່ຽວຈຳນວນຫລາຍພົບເຫັນ

ການນຳສະເໜີຂໍ້ມູນການທ່ອງທ່ຽວ ຈະຕ້ອງຫັນມານຳໃຊ້ເຄື່ອງມືດີຈີຕອນ (Digital) ໃຫ້ຫລາຍຂຶ້ນ ແລະ ຜະລິດສື່ສິ່ງພິມເຊັ່ນ: ແຜ່ນພັບ ແລະ ແຜນທີ່ທ່ອງທ່ຽວໃຫ້ໜ້ອຍລົງ. ເນື່ອງຈາກການນຳສະເໜີຂໍ້ມູນໃນຮູບແບບດີຈີຕອນແມ່ນສາມາດປັບປຸງໄດ້ງ່າຍ, ມີຕົ້ນທຶນໜ້ອຍ ແລະ ນັກທ່ອງທ່ຽວສາມາດເຂົ້າເຖິງໄດ້ສະດວກ.

## 13)ການຕິດຕາມ ແລະ ປະເມີນຜົນ (Monitoring and Evaluation)

ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດການນຳສະເໜີຂໍ້ມູນການທ່ອງທ່ຽວຂອງແຂວງວຽງຈັນ ແມ່ນມີຄວາມສຳຄັນ, ເຮັດໃຫ້ຮູ້ໄດ້ວ່າບັນດາກິດຈະກຳທີ່ກຳລັງຈັດຕັ້ງປະຕິບັດ ກໍ່ຄືການນຳສະເໜີຂໍ້ມູນໃນຮູບແບບປ້າຍ, ສື່ດີຈີຕອນ, ສື່ສິ່ງພິມ ແລະ ການນຳທ່ຽວ ຈະສາມາດເຮັດໃຫ້ບັນລຸຈຸດປະສົງ ແລະ ເປົ້າໝາຍທີ່ໄດ້ກຳນົດໄວ້ໃນບົດທີ 2 ຫລືບໍ່ ຫລື ສາມາດບັນລຸໄດ້ໃນລະດັບໃດ. ໜຶ່ງໃນຈຸດປະສົງຂອງການນຳສະເໜີຂໍ້ມູນການທ່ອງທ່ຽວໄດ້ກຳນົດໄວ້ວ່າ: ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດຈົດຈຳໃຈຄວາມໃນການນຳສະເໜີ (Theme) ຂອງເລື່ອງລາວທີ່ນຳສະເໜີຢູ່ສະຖານທີ່ທ່ອງທ່ຽວ ພາຍຫລັງສຳເລັດການທ່ອງທ່ຽວຢູ່ແຂວງວຽງຈັນ. ສະນັ້ນ, ຄຳຖາມສຳຄັນໃນການຕິດຕາມ ແລະ ປະເມີນຜົນແມ່ນມີນັກທ່ອງທ່ຽວຈັກສ່ວນຮ້ອຍທີ່ສາມາດຈົດຈຳໃຈຄວາມໃນການນຳສະເໜີໄດ້. ຖ້າກວມເອົາອັດຕາສ່ວນໜ້ອຍ, ສະແດງວ່າວິທີການນຳສະເໜີຂໍ້ມູນຍັງບໍ່ທັນແທດເໝາະກັບກຸ່ມຕະຫລາດເປົ້າໝາຍ.

ເພື່ອເຮັດໃຫ້ສາມາດປັບປຸງຮູບແບບການນຳເໜີຂໍ້ມູນການທ່ອງທ່ຽວໄດ້ຢ່າງຖ່ວງທັນ, ຈະຕ້ອງມີການຕິດຕາມ ແລະ ປະເມີນຜົນເປັນປະຈຳ ໂດຍບໍ່ລໍຖ້າໃຫ້ເວລາຜ່ານໄປດົນເກີນໄປ. ໄລຍະນີ້ເອີ້ນວ່າໄລຍະທີ່ກຳລັງຈັດຕັ້ງປະຕິບັດກິດຈະກຳ, ເຊິ່ງສາມາດນຳໃຊ້ວິທີການແບບງ່າຍດາຍເຊັ່ນ: ການໄປຢືນສັງເກດພຶດຕິກຳຂອງນັກທ່ອງທ່ຽວຢູ່ຕາມສະຖານທີ່ທ່ອງທ່ຽວ, ເບິ່ງວ່າເຂົາເຈົ້າຢຸດຢືນອ່ານປ້າຍປະຫວັດແຫລ່ງທ່ອງທ່ຽວຫລືບໍ່ ແລະ ໃຊ້ເວລາອ່ານດົນປານໃດ. ຜູ້ຕິດຕາມ ແລະ ປະເມີນຜົນສາມາດສັງເກດເບິ່ງວ່ານັກທ່ອງທ່ຽວໄດ້ຈັບເອົາແຜ່ນພັບທີ່ວາງໄວ້ຫລືບໍ່ ແລະ ຕິດຕາມເບິ່ງສະຖິຕິຜູ້ນຳໃຊ້ຢູ່ໃນເວັບໄຊ, ແອບມືຖືທ່ອງທ່ຽວ ແລະ ສື່ສັງຄົມອອນລາຍຕ່າງໆ.

ພາຍຫລັງຈັດຕັ້ງປະຕິບັດກິດຈະກຳ ຫລື ໄລຍະທ້າຍປີ ຈະຕ້ອງມີການຕິດຕາມ ແລະ ປະເມີນຜົນໃນຮູບແບບທີ່ໃຫຍ່ ແລະ ເປັນລະບົບກວ່າການຕິດຕາມ ແລະ ປະເມີນຜົນທີ່ປະຕິບັດເປັນປະຈຳ. ຈຸດປະສົງແມ່ນເພື່ອເຮັດໃຫ້ສາມາດເຂົ້າໃຈພາບລວມທັງໝົດຂອງການນຳສະເໜີຂໍ້ມູນຢູ່ແຕ່ລະສະຖານທີ່ທ່ອງທ່ຽວ. ວິທີການທີ່ສາມາດນຳໃຊ້ໄດ້ແມ່ນການແຈກຢາຍແບບສອບຖາມເພື່ອໃຫ້ນັກທ່ອງທ່ຽວຕອບເອງ (Self – Administered Questionnaire) ແລະ ການສຳພາດໂດຍນຳໃຊ້ແບບສອບຖາມ. ໃນໄລຍະນີ້, ຄວນກຳນົດເອົາກຸ່ມຕົວຢ່າງ (Sample Size) ໃນຈຳນວນທີ່ຫລາຍສົມຄວນ, ເພື່ອເຮັດໃຫ້ສາມາດນຳມາວິເຄາະໃນຮູບແບບສະຖິຕິໄດ້. ຜົນໄດ້ຮັບຂອງການຕິດຕາມ ແລະ ປະເມີນຜົນໃນແຕ່ລະໄລຍະ ແມ່ນຈະຖືກນຳໃຊ້ເຂົ້າໃນການປັບປຸງເນື້ອໃນ ແລະ ວິທີການນຳສະເໜີຂໍ້ມູນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

# ເອກະສານອ້າງອີງ


- Project Administration Memorandum, LAO/VIE: Greater Mekong Subregion Sustainable Tourism Development Project, Asian Development Bank, 2009
- Project Administration Manual, Second Greater Mekong Subregion Tourism Infrastructure for Inclusive Growth Project, Asian Development Bank, 2018
- Interpretive Master Planning, Vol. One: Strategies for the New Millennium, John A Veverka, 2018
- Interpreting Our Heritage, Freeman Tilden, Third Edition, 1977
- Preserving Impermanence, The Creation of Heritage in Vientiane, Laos, Page 159, Anna Karlstrom, Department of Archaeology and Ancient History, Uppsala University, Sweden, 2009
- Outdoor Interpretive Signage, Nova Scotia, Canada
- ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງວຽງຈັນ ສຳລັບປີ 2020 – 2025, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2020
- ກົດໝາຍວ່າດ້ວຍປ້າຍ, ສະພາແຫ່ງຊາດ, 2018
- ປື້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2